ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

---------------------------------------------------

# ບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ

## (ປະຈຳເດືອນ 10/2013)






ຄະນະບໍລິຫານ ທລຍ ຂັ້ນສູນກາງ

*ກະກຽມໂດຍ:* ໜ່ວຍງານຕິດຕາມປະເມີນຜົນ

19 ພະຈິກ 2013

ສາລະບານ

ການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ຮອບວຽນທີ 9 ແລະ 10 ........ 1
I. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 9 (ຮອດທ້າຍເດືອນ ຕຸລາ 2013) ........ 1
ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ ........ 1
ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 9 (ຮອດທ້າຍເດືອນ ຕຸລາ 2013) ........ 2
II. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (ຮອດທ້າຍເດືອນ ຕຸລາ 2013) ........ 2
ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ ........ 2
ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 10 (ຮອດທ້າຍເດືອນ ຕຸລາ 2013) ........ 3
III. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (GOL) ຮອດທ້າຍເດືອນ ຕຸລາ 2013 ........ 4
ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ: ........ 4
ຂ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດດ້ານການເງິນ: ........ 4
IV. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໂຄງການປັບປຸງການຄ້ຳປະກັນສະບຽງອາຫານ ຢູ່ເຂດເນີນສູງຂອງ ສປປ ລາວ (ຮອບວຽນ 9) ........ 5
V. ຄວາມຄືບໜ້າບາງໜ້າວຽກຂອງແຕ່ລະພະແນກ ........ 5
ກ. ພະແນກພັດທະນາຊຸມຊົນ ........ 5
ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ........ 5
ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ ........ 6
ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ ........ 8
ຂ. ພະແນກວິສະວະກຳ ........ 8
ຄ. ພະແນກຕິດຕາມ - ປະເມີນຜົນ ........ 9
ຄ.1. ວຽກງານແຜນທີ່ ........ 9
ຄ.2. ວຽກງານ ກສກ (ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ) ........ 9
ຄ.3. ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS) ........ 10
ຄ.4. ວຽກງານວິໄຈ ແລະ ປະເມີນຜົນ ........ 10
ງ. ພະແນກບໍລິຫານ-ການເງິນ ........ 11
ງ.1. ວຽກງານຈັດຕັ້ງ ........ 11
ງ.2. ວຽກງານຈັດຊື້-ຈັດຈ້າງ ........ 12
ງ.3. ວຽກງານການເງິນ ........ 13
ຈ. ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ (ໂຄງການ LONG) ........ 14
ຈ.1 ວຽກບໍລິຫານ ແລະ ແຜນການ ........ 14
ຈ.2 ວຽກໂພສະນາການ ........ 14
ຈ.3 ວຽກປັບປຸງຄຸນນະພາບຊີວິດການເປັນຢູ່ ........ 15
VI. ແຜນດຳເນີນງານ ແຕ່ວັນທີ 01-31 ພະຈິກ 2013 ຂອງແຕ່ລະພະແນກ ........ 15
ກ. ພະແນກພັດທະນາຊຸມຊົນ ........ 15
ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ........ 15
ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ: ........ 15
ກ.3 ບົດບາດຍິງ - ຊາຍ ........ 16
ຂ. ພະແນກວິສະວະກຳ ........ 16

ຄ. ພະແນກຕິດຕາມ-ປະເມີນຜົນ ........ 16
ຄ.1. ວຽກງານແຜນທີ່ ........ 16
ຄ.2. ວຽກງານ ກສກ (ກົນໄກສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ) ........ 16
ຄ.3. ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS) ........ 17
ຄ.4. ວຽກງານວິໄຈ ແລະ ປະເມີນຜົນ ........ 17
ງ. ພະແນກບໍລິຫານ- ການເງິນ ........ 17
ງ.1. ວຽກງານຈັດຕັ້ງ ........ 17
ງ.2. ວຽກງານຈັດຊື້ຈັດຈ້າງ ........ 18
ງ.3. ວຽກງານການເງິນ ........ 18
ຈ. ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພສະນາການ (ໂຄງການ LONG) ........ 19
ຈ.1 ວຽກບໍລິຫານ ແລະ ແຜນການ ........ 19
ຈ.2 ວຽກໂພສະນາການ ........ 19
ຈ.3 ວຽກປັບປຸງຄຸນນະພາບຊີວິດການເປັນຢູ່ ........ 19
ເອກະສານຊ້ອນທ້າຍ ........ 20

# ການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ຮອບວຽນທີ 9 ແລະ 10

## *I. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 9 (ຮອດທ້າຍເດືອນ ຕຸລາ 2013)*

### *ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ*

ອີງຕາມການລາຍງານໃນເດືອນທີ່ຜ່ານມາ ໂຄງການທີ່ ທລຍ ຈະຈັດຕັ້ງປະຕິບັດໃນເບື້ອງຕົ້ນຂອງຮອບວຽນ 9 ແມ່ນ 265 ໂຄງການ ພາຍຫລັງຈັດຕັ້ງປະຕິບັດຕົວຈິງມາຮອດທ້າຍເດືອນຕຸລາ 2013 ມີ 4 ໂຄງການທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ໃນນັ້ນມີດັ່ງນີ້:

- 1 ໂຄງການຈາກ ແຂວງ ຫົວພັນ ເມືອງຊຽງຄໍ້ ກຸ່ມສົບມອນ ບ້ານຕະອ່ອນໃຕ້ ໂຄງການດຶງຕານາງເຄືອຄ່າຍໄຟຟ້າ ງົບປະມານແມ່ນ 66,300,000 ກີບ ໂຄງການນີ້ບໍສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກງົບປະມານບໍ່ພຽງພໍ.
- 1 ໂຄງການຈາກແຂວງ ເຊກອງ ເມືອງກະລຶມ ກຸ່ມຈ່າແລະ ບ້ານ ຕັງປາ ໂຄງການສ້າງແຜງໂຊລາຜະລິກກະແສໄຟ້າ (Solar cell) ງົບປະມານແມ່ນ 104,000,000 ກີບ ໂຄງການນີ້ບໍສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກພື້ນທີ່ດັ່ງກ່າວລັດຖະບານມີແຜດຶງເຄືອຄ່າຍຕາໜ່າງໄຟຟ້າເຂົ້າ.
- ແຂວງ ອັດຕະປື 1 ໂຄງການ ທີ່ເມືອງຊານໄຊ ກຸ່ມນໍ້າງອນ ບ້ານນໍ້າງອນ ໂຄງການກໍສ້າງໂຮງຮຽນງົບປະມານແມ່ນ 319,535,465 ກີບ ໂຄງການນີ້ບໍສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກງົບປະມານບໍ່ພຽງພໍ.
- ແຂວງ ຫລວງນໍ້າທາ 1 ໂຄງການ ທີ່ເມືອງນາແລ ກຸ່ມພູຫລວງ ບ້ານຫາດນາແລ້ງ ໂຄງການກໍ່ສ້າງໂຮງຮຽນງົບປະມານແມ່ນ 294,955,317 ກີບ ໂຄງການນີ້ບໍສາມາດຈັດຕັ້ງປະຕິບັດໄດ້ເນື່ອງ ຈາກ ຖືກໂຄງການກໍ່ສ້າງເຂື່ອນ.

ລວມມູນຄ່າທັງໝົດທີ່ບໍ່ໄດ້ຖືກນຳໃຊ້ໃນ 4 ໂຄງການແມ່ນ 784,790,782 ກີບ, ເຊິ່ງມີຜູ້ໄດ້ຮັບຜົນປະໂຫຍດທັງໝົດແມ່ນ 1,329 ຄົນ ເປັນຍິງ 868 ຄົນ ເປັນຊົບເຜົ່າ 970 ຄົນ.

ດັ່ງນັ້ນໂຄງການທີ່ຈັດຕັ້ງປະຕິບັດໃນຮອບວຽນທີ 9 ແມ່ນເຫລືອ 261 ໂຄງການໂດຍມີຄວາມຄືບໜ້າດັ່ງນີ້: ທລຍ ໄດ້ຈັດຕັ້ງປະຕິບັດບັນດາໂຄງການຍ່ອຍໄດ້ທັງໝົດ 261 ໂຄງການ, ກວມເອົາ 100 % ຂອງໂຄງ ການທັງໝົດໃນນັ້ນມີຈຳນວນ 258 ໂຄງ ການຍ່ອຍ ຫຼື ເທົ່າກັບ 99 % ແມ່ນໄດ້ປະຕິບັດສຳເລັດແລ້ວ 100 % ເພີ່ມຂຶ້ນ 2 % ເມື່ອທຽບກັບເດືອນທີ່ຜ່ານມາ ແລະ 3 (ຫຼື 1 %) ໂຄງການຍ່ອຍແມ່ນມີຄວາມຄືບໜ້າໜ້ອຍກວ່າ 50 % ລາຍລະອຽດຂອງໂຄງການ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມີດັ່ງຕາຕະລາງລຸ່ມນີ້:

ຕາຕະລາງ 1: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 9 (ແຍກຕາມຂະແໜງການ).

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 0 | 1 | 0 | 71 | 72 | 24,965,953,346 |
| ສາທາລະນະສຸກ | 0 | 0 | 0 | 10 | 10 | 2,774,749,214 |
| ນໍ້າສະອາດ | 0 | 2 | 0 | 110 | 112 | 19,379,059,065 |
| ກະສິກຳ | 0 | 0 | 0 | 19 | 19 | 3,054,711,097 |
| ຄົມມະນາຄົມ | 0 | 0 | 0 | 45 | 45 | 9,868,848,666 |
| ພະລັງງານ | 0 | 0 | 0 | 3 | 3 | 1,099,325,971 |
| ລວມ | 0 | 3 | 0 | 258 | 261 | 61,107,547,359 |
| ເປີເຊັນ | 0% | 1% | 0% | 99% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2013

ຕາຕະລາງ 2: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 9 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫລວງນ້ຳທາ | 0 | 0 | 0 | 25 | 25 | 4,661,212,605 |
| ຫົວພັນ | 0 | 0 | 0 | 107 | 107 | 16,944,831,999 |
| ຊຽງຂວາງ | 0 | 0 | 0 | 32 | 32 | 9,198,522,965 |
| ສະຫວັນນະເຂດ | 0 | 0 | 0 | 41 | 41 | 14,739,611,006 |
| ສາລະວັນ | 0 | 0 | 0 | 14 | 14 | 4,264,163,359 |
| ເຊກອງ | 0 | 1 | 0 | 24 | 25 | 7,099,961,353 |
| ອັດຕະປື | 0 | 2 | 0 | 15 | 17 | 4,199,244,072 |
| ລວມ | 0 | 3 | 0 | 258 | 261 | 61,107,547,359 |
| ເປີເຊັນ | 0% | 1% | 0% | 99% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2013

## ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 9 (ຮອດທ້າຍເດືອນ ຕຸລາ 2013)

ຄວາມຄືບໜ້າການຈັດຕັ້ງປະຕິບັດດ້ານການເງິນ ມາຮອດທ້າຍເດືອນ ຕຸລາ 2013. ການເບີກຈ່າຍງົບປະມານສຳລັບຮອບວຽນ 9 ແມ່ນເຫັນວ່າຄວາມລ້າຊ້າເລັກນ້ອຍເມື່ອທຽບກັບຄວາມຄືບໜ້າຂອງກິດຈະ ກຳຍ່ອຍ. ຊຶ່ງມາຮອດປະຈຸບັນ (ທ້າຍເດືອນ ຕຸລາ 2013) ໂຄງການໄດ້ດຳເນີນການຊຳລະເງິນທັງໝົດຈຳນວນ 53.83 ຕື້ກີບ ຫຼື ເທົ່າກັບ 88.09 % ຂອງຈຳນວນເງິນທັງໝົດ ເພີ່ມຂຶ້ນ 5.24% ເມື່ອທຽບກັບເດືອນທີ່ຜ່ານມາ, ໃນນັ້ນແຂວງຫົວພັນ ຈຳນວນ 15.19 ຕື້ກີບ, ຫຼວງນ້ຳທາ 5.13 ຕື້ກີບ, ສະຫວັນນະເຂດ 13.04 ຕື້ກີບ, ຊຽງຂວາງ 9.00 ຕື້ກີບ, ສາລະວັນ 4.00 ຕື້ກີບ, ເຊກອງ 5.55 ຕື້ກີບ ແລະ ແຂວງອັດຕະປື 1.81 ຕື້ກີບ.

ເຫດຜົນໃນການຊຳລະເງິນຊັກຊ້າ ແມ່ນມາຈາກຂັ້ນຕອນການກະກຽມເອກະສານການຂໍເບີກຈ່າຍຈາກຂັ້ນແຂວງ ແລະ ຂັ້ນເມືອງ, ການຂໍເບີກຈ່າຍໃນແຕ່ລະຄັ້ງແມ່ນໜ່ວຍງານ ທລຍ ຂັ້ນແຂວງ ແລະ ຂັ້ນເມືອງ ຕ້ອງສະຫລຸບການເບີກຈ່າຍໃນເດືອນຜ່ານມາໃຫ້ສຳເລັດເສຍກ່ອນ ຈິ່ງສາມາດຂໍເບີກຈ່າຍໄດ້. ເຖິງແນວໃດກໍ່ຕາມ, ບັນຫາດັ່ງກ່າວແມ່ນ ໄດ້ຮັບການປັບປຸງ ແລະ ແກ້ໄຂດີຂຶ້ນເທື່ອລະກ້າວ.

## II. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (ຮອດທ້າຍເດືອນ ຕຸລາ 2013)

## ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ

ອີງຕາມການລາຍງານໃນເດືອນທີ່ຜ່ານມາ ໂຄງການທີ່ ທລຍ ຈະຈັດຕັ້ງປະຕິບັດໃນເບື້ອງຕົ້ນຂອງຮອບວຽນ 10 ແມ່ນ 465 ໂຄງການ ພາຍຫລັງຈັດຕັ້ງປະຕິບັດຕົວຈິງມາຮອດທ້າຍເດືອນຕຸລາ 2013 ມີ 72 ໂຄງການທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ດັ່ງນັ້ນໂຄງການຈັດຕັ້ງປະຕິບັດຕົວຈິງແມ່ນ 393 ໂຄງການ (ເຊິ່ງລາຍລະອຽດຕາມເອກະສານຊ້ອນທາຍ)

ສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 10 ມາຮອດທ້າຍເດືອນ ຕຸລາ 2013, ໂຄງການໄດ້ຈັດຕັ້ງປະຕິບັດໂຄງການຍ່ອຍທັງໝົດ 372 ໂຄງການ ຫຼື ກວມເອົາ 94 % ຂອງຈຳນວນ ໂຄງການທັງໝົດ (393 ໂຄງ ການ), ໃນນັ້ນ ມີ 314 (ຫຼື 80 %) ໂຄງການຍ່ອຍແມ່ນໄດ້ປະຕິບັດສຳເລັດແລ້ວ 100 % ເພີ່ມຂຶ້ນ 10 % ເມື່ອທຽບກັບເດືອນທີ່ຜ່ານມາ, ໂຄງການຍ່ອຍທີ່ມີຄວາມຄືບໜ້າຫລາຍກວ່າ 50 % ມີ 48 ຫຼື ເທົ່າກັບ 12 % ແລະ ມີ 10 (ຫຼື 3 %) ໂຄງການຍ່ອຍ ແມ່ນມີຄວາມຄືບໜ້າໜ້ອຍກວ່າ 50 % ແລະ ອີກ 21 ໂຄງການຍ່ອຍ ຫລື ເທົ່າກັບ 5 % ແມ່ນຍັງບໍ່ທັນມີຄວາມຄືບໜ້າ, ລາຍລະອຽດຂອງໂຄງການ ແລະ ຄືບໜ້າຂອງການຈັດຕັ້ງປະຕິບັດມີຄືດັ່ງລຸ່ມນີ້:

ຕາຕະລາງ 5: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 10 (ແຍກຕາມຂະແໜງການ)

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 4 | 0 | 18 | 68 | 90 | 24,044,090,732 |
| ຄົມມະນາຄົມ | 5 | 6 | 14 | 80 | 105 | 19,332,239,246 |
| ພະລັງງານ | 0 | 0 | 0 | 7 | 7 | 1,950,624,727 |
| ສາທາລະນະສຸກ | 0 | 1 | 2 | 14 | 17 | 2,659,862,201 |
| ນໍ້າສະອາດ | 10 | 2 | 14 | 125 | 151 | 21,825,726,147 |
| ທຶນ ສາທາລະນະສຸກ | 0 | 1 | 0 | 1 | **2** | 175,000,000 |
| ກະສິກໍາ | 2 | 0 | 0 | 19 | 21 | 3,205,027,352 |
| ລວມ | 21 | 10 | 48 | 314 | 393 | 73,192,570,405 |
| ເປີເຊັນ | 5% | 3% | 12% | 80% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2013

ຕາຕະລາງ 6: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 10 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຜົ້ງສາລີ | 2 | 1 | 4 | 18 | 25 | 5,346,450,000 |
| ອຸດົມໄຊ | 4 | 2 | 6 | 42 | 54 | 9,959,000,000 |
| ຫລວງພະບາງ | 3 | 1 | 14 | 26 | 44 | 8,680,250,000 |
| ຫຼວງນໍ້າທາ | 0 | 2 | 1 | 26 | 29 | 3,352,680,477 |
| ຫົວພັນ | 4 | 2 | 6 | 77 | 89 | 14,875,006,474 |
| ຊຽງຂວາງ | 0 | 0 | 3 | 31 | 34 | 7,417,447,554 |
| ສະຫວັນນະເຂດ | 0 | 0 | 2 | 54 | 56 | 10,636,374,801 |
| ສາລະວັນ | 0 | 0 | 1 | 18 | 19 | 3,663,321,070 |
| ເຊກອງ | 5 | 1 | 4 | 13 | 23 | 5,626,089,886 |
| ອັດຕະປື | 4 | 1 | 7 | 9 | 20 | 3,710,950,143 |
| ລວມ | 20 | 10 | 48 | 314 | 393 | 73,192,570,405 |
| ເປີເຊັນ | 5% | 3% | 12% | 80% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2013

## *ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 10 (ຮອດທ້າຍເດືອນ ຕຸລາ 2013)*

ຄວາມຄືບໜ້າການຈັດຕັ້ງປະຕິບັດດ້ານການເງິນ ມາຮອດທ້າຍເດືອນ ຕຸລາ 2013. ການເບີກຈ່າຍງົບປະມານສໍາລັບຮອບວຽນ 10 ແມ່ນເຫັນວ່າຄວາມລ້າຊ້າເລັກນ້ອຍເມື່ອທຽບກັບຄວາມຄືບໜ້າຂອງກິດຈະກໍາຍ່ອຍ. ຊຶ່ງມາຮອດປະຈຸບັນ (ທ້າຍເດືອນ ຕຸລາ) ໂຄງການໄດ້ດໍາເນີນການຊໍາລະເງິນທັງໝົດຈໍານວນ 39.16 ຕື້ກີບ ຫຼືເທົ່າກັບ 53.59 % ຂອງຈໍານວນເງິນທັງໝົດ ເພີ່ມຂຶ້ນ 12.32 % ເມື່ອທຽບກັບເດືອນທີ່ຜ່ານມາ, ໃນນັ້ນແຂວງຫົວພັນ ຈໍານວນ 9.87 ຕື້ກີບ, ສະຫວັນນະເຂດ 5.54 ຕື້ກີບ, ຊຽງຂວາງ 4.44 ຕື້ກີບ, ອັດຕະປື 1.40 ຕື້ກີບ ເຊກອງ 1.63 ຕື້ກີບ, ສາລະວັນ 1.6 ຕື້ກີບ, ອຸດົມໄຊ 6.80 ຕື້ກີບ, ຫລວງພະບາງ 4.5 ຕື້ກີບ, ຫລວງນໍ້າທາ 1.10 ຕື້ກີບ ແລະ ແຂວງ ຜົ້ງສາລີ ແມ່ນ 2.24 ຕື້ກີບ.

## *III. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (GOL) ຮອດທ້າຍເດືອນ ຕຸລາ 2013*

### *ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ:*

ການຈັດຕັ້ງປະຕິບັດໂຄງການຍ່ອຍບ້ວງທຶນສົມທົບຂອງລັດຖະບານ ຈຳນວນທັງໝົດ 86 ໂຄງການນັ້ນ, ມາຮອດທ້າຍເດືອນ ຕຸລາ 2013, ມີ 86 ໂຄງການ ຫຼື ເທົ່າກັບ 100 % ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ (*ລາຍລະອຽດເບິ່ງຕາຕະລາງ 7 ລຸ່ມນີ້*)

ຕາຕະລາງ 7: ຄວາມຄືບໜ້າຂອງໂຄງການສົບທົບທຶນລັດຖະບານ ຮອດທ້າຍເດືອນ ຕຸລາ 2013 (ແຍກຕາມຂະແໜງ):

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 0 | 0 | 0 | 15 | 15 | 4,121,567,983 |
| ຄົມມະນາຄົມ | 0 | 0 | 0 | 11 | 11 | 2,206,621,934 |
| ພະລັງງານໄຟຟ້າ | 0 | 0 | 0 | 2 | 2 | 637,591,518 |
| ສາທາລະນະສຸກ | 0 | 0 | 0 | 2 | 2 | 224,811,919 |
| ນ້ຳສະອາດ | 0 | 0 | 0 | 40 | 50 | 7,996,147,554 |
| ກະສິກຳ | 0 | 0 | 0 | 6 | 6 | 813,259,092 |
| ລວມ | 0 | 0 | 0 | 86 | 86 | 16,000,000,000 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2013

ຕາຕະລາງ 8: ໂຄງການສົບທົບທຶນລັດຖະບານ ຮອດທ້າຍເດືອນ ຕຸລາ 2013 (ແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫຼວງນ້ຳທາ | 0 | 0 | 0 | 18 | 18 | 2,239,400,477 |
| ຫົວພັນ | 0 | 0 | 0 | 21 | 21 | 3,493,492,695 |
| ຊຽງຂວາງ | 0 | 0 | 0 | 12 | 12 | 2,487,091,004 |
| ສະຫວັນນະເຂດ | 0 | 0 | 0 | 17 | 17 | 3,594,450,075 |
| ສາລະວັນ | 0 | 0 | 0 | 6 | 6 | 1,396,573,598 |
| ເຊກອງ | 0 | 0 | 0 | 6 | 6 | 1,349,492,008 |
| ອັດຕະປື | 0 | 0 | 0 | 6 | 6 | 1,439,500,143 |
| ລວມ | 0 | 0 | 0 | 86 | 86 | 16,000,000,000 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2013

### *ຂ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດດ້ານການເງິນ:*

ມາຮອດທ້າຍເດືອນ ຕຸລາ 2013, ການຊຳລະສະສາງດ້ານວຽກງານການເງິນ ແມ່ນຍັງບໍ່ທັນໄດ້ຈັດຕັ້ງປະຕິບັດຈັກເປີເຊັນເທື່ອ ຊຶ່ງເຫັນວ່າມີຄວາມລ້າຊ້າຫຼາຍ ເມື່ອທຽບກັບຄວາມຄືບໜ້າດ້ານກິດຈະກຳ, ບັນຫາການຊຳລະເງິນຊັກຊ້າ ແມ່ນຍ້ອນມີການດັດແກ້ງົບປະມານທຶນສົມທົບຂອງລັດຖະບານ ຈາກລະຫັດຂອງສາລະບານການລົງທຶນແຂວງ ມາເປັນລະບົບຂອງຄະນະພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ) ເພື່ອສະດວກໃນການເບີກຈ່າຍ ແລະ ຊຳລະສະສາງໃຫ້ແກ່ໂຄງການ ການເບີກຈ່າຍຕົວຈິງນັ້ນແມ່ນລໍຖ້າເງິນທີ່ມີໃນຄັງເງິນແຫ່ງຊາດ.

## *IV. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໂຄງການປັບປຸງການຄໍ້າປະກັນສະບຽງອາຫານ ຢູ່ເຂດເນີນສູງຂອງ ສປປ ລາວ (ຮອບວຽນ 9)*

ມາຮອດທ້າຍເດືອນ ຕຸລາ 2013, ການຈັດຕັ້ງປະຕິບັດໂຄງການຍ່ອຍພາຍໃຕ້ໂຄງການປັບປຸງການຄໍ້າປະກັນສະບຽງອາຫານຢູ່ ເຂດເນີນສູງຂອງ ສປປລາວ ແມ່ນມີຄວາມຄືບໜ້າຢ່າງພົ້ນເດັ່ນຢ່າງເຫັນໄດ້ຊັດເຈນພໍສົມຄວນ, ຊຶ່ງມາຮອດທ້າຍເດືອນ ກໍລະກົດ 2013, ວຽກງານດັ່ງກ່າວໄດ້ຈັດຕັ້ງປະຕິບັດສໍາເລັດ 100 % ເມື່ອທຽບກັບແຜນການປະຈໍາປີ, ສາລັບລາຍລະອຽດທາງດ້ານການເງິນແມ່ນໄດ້ສໍາເລັດການເບີກຈ່າຍແລ້ວ 10.17 ຕື້ກີບ ຫຼືເທົ່າກັບ 97.78 % ຂອງຈໍານວນເງິນທັງໝົດ ເພີ່ມຂຶ້ນ 2.02 % ທຽບກັບເດືອນທີ່ຜ່ານມາ ສ່ວນລາຍລະອຽດຂອງຄວາມຄືບໜ້າແມ່ນມີຄືດັ່ງລຸ່ມນີ້.

<u>ຕາຕະລາງ 3: ຄວາມຄືບໜ້າຂອງໂຄງການຍ່ອຍ LUFSIP ຮອດທ້າຍເດືອນ ຕຸລາ 2013 (ແຍກຕາມຂະແໜງ):</u>

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຄົມມະນາຄົມ | 0 | 0 | 0 | 11 | 12 | 1,786,348,495 |
| ພະລັງງານໄຟຟ້າ | 0 | 0 | 0 | 1 | 1 | 165,000,000 |
| ນໍ້າສະອາດ | 0 | 0 | 0 | 5 | 5 | 7,804,962,057 |
| ກະສິກໍາ | 0 | 0 | 0 | 72 | 77 | 8,272,346,792 |
| ລວມ | 0 | 0 | 0 | 89 | 89 | 10,223,695,287 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2013

<u>ຕາຕະລາງ 4: ຄວາມຄືບໜ້າຂອງໂຄງການຍ່ອຍ LUFSIP ຮອດທ້າຍເດືອນ ຕຸລາ 2013 (ແຍກຕາມແຂວງ)</u>

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫລວງນໍ້າທາ | 0 | 0 | 0 | 17 | 18 | 2,149,083,386 |
| ຫົວພັນ | 0 | 0 | 0 | 46 | 46 | 4,400,553,400 |
| ຊຽງຂວາງ | 0 | 0 | 0 | 8 | 8 | 841,643,323 |
| ສະຫວັນນະເຂດ | 0 | 0 | 0 | 18 | 18 | 2,832,415,177 |
| ລວມ | 0 | 0 | 0 | 89 | 89 | 10,223,695,287 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ຕຸລາ 2013

## *V. ຄວາມຄືບໜ້າບາງໜ້າວຽກຂອງແຕ່ລະພະແນກ*

### *ກ. ພະແນກພັດທະນາຊຸມຊົນ*

### *ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອໍານາດການປົກຄອງທ້ອງຖິ່ນ*

1. ລົງຊ່ວຍພະແນກຕິດຕາມ-ປະເມີນຜົນ ໃນການລົງກວດກາລະບົບການປ້ອນຂໍ້ມູນເຂົ້າໃນຖານຂໍ້ມູນຂອງທລຍ ຢູ່ແຂວງພາກເໜືອ, ການຕິດຕາມໄປຄັ້ງນີ້ແມ່ນ ເພື່ອຮັບປະກັນການສະໜອງຂໍ້ມູນກ່ຽວກັບກອງປະຊຸມຕ່າງໆ ຊຶ່ງທາງພັດທະນາຊຸມຊົນເປັນຜູ້ດໍາເນີນ, ພ້ອມນັ້ນ ກໍ່ຍັງໄດ້ເບິ່ງຄືນຄວາມຮັບຜິດຊອບຊ່ວຍໃນການປ້ອນຂໍ້ມູນຂອງເບື້ອງພັດທະນາຊຸມຊົນ ຢູ່ພາຍໃນແຂວງ, ການນໍາໃຊ້ແບບຟອມກອງປະຊຸມ, ຜ່ານການລົງຊຸກຍູ້ວຽກດັ່ງກ່າວເຫັນວ່າ:

- ພັດທະນາຊຸມຊົນບາງແຂວງເຊັ່ນ: ແຂວງ ຫົວພັນ, ແຂວງ ຫລວງນໍ້າທາ ຍັງບໍ່ໄດ້ນໍາໃຊ້ແບບຟອມກອງປະຊຸມ-ຝຶກອົບຮົມ (PDKV) ຢ່າງສະໝໍ່າສະເໝີ ແລະ ຄົບຖ້ວນ ຕາມທີ່ທາງ ທລຍ ກໍານົດເທົ່າທີ່ຄວນ ມີພຽງແຕ່ຕາຕະລາງບັນທຶກຜູ້ເຂົ້າຮ່ວມທົ່ວໄປ.
- ການປະສານສົມທົບ ແລະ ການສະໜອງຂໍ້ມູນ ລະຫວ່າງ 2 ໜ່ວຍງານຄື ໜ່ວຍພັດທະນາຊຸມຊົນ ແລະ ໜ່ວຍງານຕິດຕາມປະເມີນຜົນ ຢູ່ແຂວງ ອຸດົມໄຊ ຍັງບໍ່ທັນກົມກຽວ.
- ການເກັບຮັກສາເອກະສານ ແລະບັນທຶກວຽກ ຂອງພະນັກງານພັດທະນາຊຸມຊົນຢູ່ຂັ້ນແຂວງ ຍັງຕ້ອງເອົາໃຈໃສ່ຕື່ມ.

2. ລົງເບິ່ງການຈັດກອງປະຊຸມທົບທວນຄືນແຜນພັດທະນາບ້ານ ຢູ່ 1 ບ້ານໃນແຂວງຫົວພັນ ແລະ 1 ບ້ານຢູ່ແຂວງອຸດົມໄຊ, ເຫັນວ່າການເຂົ້າຮ່ວມຂອງຊຸມຊົນແມ່ນຢູ່ໃນລະດັບດີ ແຕ່ການສະແດງຄໍາຄິດເຫັນໃນກອງປະຊຸມ ຍັງເປັນລັກສະນະບໍ່ຟົດຟື້ນ ໂດຍສະເພາະຜູ້ເຂົ້າຮ່ວມທີ່ເປັນແມ່ຍິງ ເຖິງແມ່ນວ່າຈະນໍາໃຊ້ຜູ້ປະສານງານແມ່ຍິງ ຫລື ພາສາຊົນເຜົ່າກໍ່ຕາມ. ການດໍາເນີນກອງປະຊຸມຂອງຜູ້ອໍານວຍຄວາມສະດວກ ຍັງເປັນສິ່ງທ້າທາຍ ໃນດ້ານຄວາມເຂົ້າໃຈຕກັບລະບຽບການທົບທວນ ບາງຂັ້ນຕອນ, ຄວາມເຂົ້າໃຈຕກັບຂະບວນການວາງແຜນໂດຍລວມຂອງ ທລຍ ໂດຍສະເພາະພະນັກງານຂັ້ນເມືອງຢູ່ແຂວງໃໝ່.
3. ມາຮອດທ້າຍເດືອນຕຸລາ, ບັນດາແຂວງເປົ້າໝາຍຂອງ ທລຍ ໃນ 10 ແຂວງຄື, ຫລາຍກ່ວາເຄິ່ງໜຶ່ງແມ່ນສໍາເລັດກອງປະຊຸມທົບທວນຂັ້ນບ້ານ ແລະ ຂັ້ນກຸ່ມແລ້ວ ເຊັ່ນ: ແຂວງ ຫລວງພະບາງ, ອຸດົມໄຊ, ຫລວງນໍ້າທາ, ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ແຂວງ ອັດຕະປື ຊຶ່ງຄາດວ່າຈະສາມາດເລີ່ມດໍາເນີນກອງປະຊຸມປະສານງານ-ວາງແຜນຂັ້ນເມືອງໄດ້ ໃນອາທິດທີ 1 ແລະ 2 ຂອງເດືອນພະຈິກ.
4. ປຶກສາຫາລືຕົວຈິງ ແລະ ຊອກວິທີທາງອອກຮ່ວມກັນ ສໍາລັບຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ສໍາລັບການປະຕິບັດວຽກງານໃນຂະການວາງແຜນປັບປຸງຂໍ້ແນະນໍາໃນການຄັດເລືອກຕົວແທນບ້ານ, ຕົວແທນກຸ່ມບ້ານ ການຈັດກອງປະຊຸມທົບທວນແຜນພັດທະນາບ້ານ ແລະ ກຸ່ມບ້ານ.
5. ໄດ້ນໍາພາຊ່ຽວຊານ ດ້ານການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ຫຼື ໜ່ວຍງານພັດທະນາຊຸມຊົນໄປຕິດຕາມ ແລະ ຢ້ຽມຢາມເບິ່ງ ການຈັດຕັ້ງປະຕິບັດວຽກງານ ທລຍ ຢູ່ຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ຂອງເມືອງໂພນໄຊ, ແຂວງ ຫລວງພະບາງ.
6. ວັນທີ 9-10 ໄດ້ຈັດກອງປະຊຸມທົບທວນວຽກງານພັດທະນາຊຸມຊົນ ໂດຍມີພະນັກງານພັດທະນາຊຸມຊົນແຂວງ ຈາກ 10 ແຂວງເຂົ້າຮ່ວມ, ຫົວໜ້າພະແນກ, ພະນັກງານພາຍໃນພະແນກ, ພະແນກອອ້ມຂ້າງພ້ອມທັງຊ່ຽວຊານດ້ານ ພັດທະນາຊຸມຊົນ ແລະ ຊ່ຽວຊານດ້ານບົດບາດຍິງ-ຊາຍ.
7. ໄດ້ເຂົ້າຮ່ວມ ກອງປະຊຸມ ຂົງເຂດອາຊີ ແລະ ປາຊີຟິກ ກ່ຽວກັບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ. ໃນລະຫວ່າງວັນທີ 29 ຕຸລາ - 1 ພະຈິກ 2013 ທີ່ບາລີ, ປະເທດອິນໂດເນເຊຍ.

## *ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ*

1. ການກະຈາຍຂໍ້ມູນ-ຂ່າວສານ ຜ່ານ website ຂອງ ທລຍ: ເພີ້ມຂ່າວປະຈໍາວັນຈໍານວນ 2 ຂ່າວທີ່ເວົ້າເຖິງ ທລຍ ເມືອງໝອກ ສໍາເລັດການທົບທວນຄືນແຜນພັດທະນາບ້ານ, ກຸ່ມບ້ານ ຮອບວຽນ 11 ແລະການຖອດຖອນບົດຮຽນລະຫວ່າງກຸ່ມບ້ານ, ເມືອງຂວາ, ແຂວງຜົ້ງສາລີ.
2. ໄດ້ສືບຕໍ່ ອອກຂ່າວ ຜ່ານທາງສື່ວິທະຍຸ ທັງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ
    - ທລຍ ເມືອງໝອກ ສໍາເລັດການທົບທວນຄືນແຜນພັດທະນາບ້ານ, ກຸ່ມບ້ານ ຮອບວຽນ 11.
    - ການຖອດຖອນບົດຮຽນລະຫວ່າງກຸ່ມບ້ານ ເມືອງຂວາ ແຂວງຜົ້ງສາລີ.

- ນອກຈາກນີ້ ຢູ່ແຕ່ລະແຂວງ ໄດ້ອອກຂ່າວການເຄື່ອນໄຫວວຽກງານ ທລຍ ຢູ່ແຂວງຕົນ ຢ່າງເປັນປົກກະຕິ ເຊັ່ນ: ແຂວງຜົ້ງສາລີ 3 ຫົວຂໍ້ຂ່າວ, ທລຍ ແຂວງຊຽງຂວາງ ໄດ້ອອກຂ່າວຜ່ານວິທະຍຸຊຸມຊົນເມືອງຄູນ 5 ຫົວຂໍ້ຂ່າວ, ແຂວງ ອຸດົມໄຊ 5 ຫົວຂໍ້ຂ່າວ, ແຂວງ ຫຼວງພະບາງ 9 ຫົວຂໍ້ຂ່າວ ຄື: ຜົນສຳເລັດກອງປະຊຸມການວາງແຜນພັດທະນາຂັ້ນກຸ່ມບ້ານ, ຂັ້ນເມືອງ, ການສ້າງຄວາມເຂັ້ມແຂງໃຫ້ພະນັກງານກ່ອນການລົງທົບທວນແຜນພັດທະນາກຸ່ມບ້ານໃນຮອບວຽນ 11, ຄວາມຄືບໜ້າການກໍ່ສ້າງໂຄງການຍ່ອຍ, ຄວາມສຳເລັດການກໍ່ສ້າງໂຄງການຍ່ອຍ, ການຊ່ວຍເຫລືອຂອງ ທລຍ ໃນເມືອງວຽງຄຳ ແຂວງຫລວງພະບາງ ແລະ ຂ່າວການຢ້ຽມຢາມຂອງທີມງານ ທະນາຄານໂລກໄລຍະກອງປະຊຸມທົບທວນແຜນພັດທະນາບ້ານ ແລະ ກຸ່ມບ້ານ.

3. ການອອກລາຍການສົດ ຜ່ານວິທະຍຸແຫ່ງຊາດ: ລາຍການລຸງສ້າງລຸງສາ ແລະ ລາຍການຮອບບ້ານຜ່ານເມືອງ ໂດຍສຳພາດຜູ້ປະສານງານແຂວງ 10 ແຂວງ ເປົ້າໝາຍຂອງ ທລຍ ກ່ຽວກັບຄວາມຄືບໜ້າຂອງໂຄງການການຈັດຕັ້ງປະຕິບັດໂຄງກາຍຍ່ອຍຮອບວຽນ 10.
4. ໄດ້ມີການຈັດວາງສະແດງຮູບພາບ ການເຄື່ອນໄຫວຂອງ ທລຍ 2 ຄັ້ງ: ຄັ້ງທີ່ໜຶ່ງ ເນື່ອງໃນວັນສັບປະດາສາກົນ ແລະ ວັນລຶບລ້າງຄວາມທຸກຍາກແຫ່ງຊາດ ເຊິ່ງຈັດຂຶ້ນ ໃນວັນທີ 17 ຕຸລາ 2013 ທີ່ຫໍວັດທະນະທຳແຫ່ງຊາດ ແລະ ຄັ້ງທີສອງ ໃນວັນທີ 30 ຕຸລາ 2013 ເນື່ອງໃນກອງປະຊຸມປະຈຳປີ 2013 ທີ່ວປະເທດກ່ຽວກັບ ວຽກງານສົ່ງເສີມແມ່ ແລະ ເດັກ ທີ່ຫ້ອງປະຊຸມໃຫຍ່ ຂອງຫ້ອງວ່າການລັດຖະບານ.
5. ການກະຈາຍຂໍ້ມູນ-ຂ່າວສານ ຜ່ານກະດານຂ່າວຂອງກຸ່ມບ້ານ: ທລຍ ແຂວງ ຜົ້ງສາລີ ໄດ້ຕິດຕັ້ງກະດານຂ່າວກຸ່ມບ້ານ ໃນ 3 ເມືອງ ສຳເລັດໄດ້ 90 %.

   ແຂວງ ຊຽງຂວາງ: ເມືອງທ່າໂທມ ໄດ້ຊຸກຍູ້ທີມງານກຸ່ມບ້ານອະນາໄມກະດານຂ່າວ ແລະ ຕິດຂ່າວການເຄື່ອນໄຫວຕ່າງໆຂອງວຽກງານ ທລຍ.ເມືອງໝອກ ແລະ ເມືອງຄູນ ໄດ້ຕິດຂ່າວໃສ່ກະດານຂ່າວ 2 ຫົວຂໍ້ຂ່າວກ່ຽວກັບການສະຫຼຸບຜົນການຈັດກອງປະຊຸມປະຈຳຮອບວຽນ 11-12 ແລະ ຂ່າວບຸລິມະສິດທີ່ທົບທວນຄືນຢູ່ຂັ້ນກຸ່ມບ້ານ.

   ແຂວງ ຫົວພັນ: ໄດ້ອອກຂ່າວຜ່ານກະດານຂ່າວກຸ່ມບ້ານ 9 ຫົວຂໍ້ຂ່າວ ແມ່ນຂ່າວກ່ຽວກັບ ການທົບທວນຄືນການວາງຂັ້ນບ້ານ ແລະ ຂ່າວການສະຫຼຸບເງິນປະຈຳງວດຂອງຮອບວຽນ 10 ແຕ່ລະເມືອງເປົ້າໝາຍຂອງແຂວງອຸດົມໄຊໄດ້ ຊຸກຍູ້ການອະນາໄມກະດານຂ່າວກຸ່ມບ້ານ ແລະ ໄດ້ຕິດຂ່າວກ່ຽວກັບ ແຈ້ງການຕ່າງໆ, ຕິດແຜ່ນໂຄສະນາ 10 ລະບຽບຫຼັກການຂອງ ທລຍ ໃສ່ກະດານຂ່າວຂັ້ນບ້ານ.

   ແຂວງ ຫຼວງພະບາງ: ໄດ້ຕິດຂ່າວກ່ຽວກັບບົດບັນທຶກກອງປະຊຸມທົບທວນແຜນພັດທະນາຂັ້ນບ້ານ.
6. ໄດ້ມີການນຳໃຊ້ ຟິມສາລະຄະດີ ກ່ຽວກັບການແນະນຳໂຄງການ ທລຍ 2 ທີ່ຫາກໍຜະລິດຂຶ້ນມາໃໝ່ ໃນໄລຍະຈັດກອງປະຊຸມທົບທວນຄືນ ແຜນພັດທະນາບ້ານ ແລະ ແຜນພັດທະນາກຸ່ມບ້ານ ສຳລັບຮອບວຽນທີ 11 ທັງນີ້ເພື່ອເປັນການທົບທວນຄືນ ກ່ຽວກັບລະບຽບຫລັກການຂອງ ທລຍ.
7. ໄດ້ມີການນຳໃຊ້ ຟິມສາລະຄະດີ ກ່ຽວກັບການເປັນຜູ້ອຳນວຍຄວາມສະດວກ ທີ່ຫາກໍຜະລິດຂຶ້ນມາໃໝ່ ໃນເວລາຝຶກອົບຮົມໃຫ້ແກ່ຕົວແທນບ້ານ, ຕົວແທນກຸ່ມບ້ານ ກ່ອນທີ່ຈະເຂົ້າຮ່ວມກອງປະຊຸມຕ່າງໆ.
8. ກະກຽມສະເໜີ ຂໍຜະລິດປຶ້ມແນະນຳ ທລຍ 2 (ພາສາລາວ) 4,000 ສະບັບ, ແຟ້ມໃສ່ເອກະສານຂອງ ທລຍ 5,000 ສະບັບ, ແຜ່ນໂຄສະນາວຽກ ກສກ 208 ແຜ່ນ ແລະ ແຜ່ນໂຄສະນາ 10 ລະບຽບໃນແຜ່ນດຽວ 181 ແຜ່ນ.
9. ກຳລັງອອກແບບປຶ້ມຄູ່ມື 4 ນະໂຍບາຍ ແລະ ແຜ່ນໂຄສະນາຮອບວຽນຂອງໂຄງການ ທລຍ 2 ປະຈຸບັນສຳເລັດແລ້ວປະມານ 80%.

### *ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ*

1. ໄດ້ນຳພາຊ່ຽວຊານ ດ້ານບົດບາດຍິງຊາຍ ໄປຕິດຕາມ ແລະ ຢ້ຽມຢາມເບິ່ງ ການຈັດຕັ້ງປະຕິບັດວຽກງານ ທລຍ ຢູ່ຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ຂອງເມືອງໜອງແຮດ, ແຂວງ ຊຽງຂວາງ, ເມືອງແບງ ແຂວງ ອຸດົມໄຊ.

### *ຂ. ພະແນກວິສະວະກຳ*

1. ສຳເລັດການສຳຫລວດ ແລະ ອອກແບບແຂວງໃຫມ່ ແລະ ແຂວງອັດຕະປື
2. ສືບຕໍ່ຕິດຕາມການກໍ່ສ້າງໂຄງການຍ່ອຍຮອບວຽນ 10 ທັງ PRF ແລະ ສຳລັບ LUFSIP ສຳເລັດແມ່ນສຳເລັດ 100 %.
3. ລໍຖ້າຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາ ສຳລັບວຽກຮ່ວມມືກັບກົມອາຊີວະ ກ່ຽວກັບການສ້າງວິຊາການຂັ້ນບ້ານຄືບຫນ້າໄປ 30 %.
4. ສຳເລັດວຽກງານຄວບຄູມຄຸນນະພາບ
5. ສຳເລັດການສັງລວມງົບປະມານຮອບວຽນ 11 ໃສ່ຕາຕະລາງສັງລວມ
6. ສືບຕໍຕິດຕາມການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 10 ຄືບໜ້າໄປ 70%
7. ເຂົ້າຮ່ວມກອງປະຊຸມສະຫລຸບການຈັດຕັ້ງປະຕິບັດວຽກງານໂຄງການຄ້ຳປະກັນສະບຽງອາຫານເຂດເນີນສູງຂອງ ສປປ ລາວ (ຄປຄສ-LUFSIP) ສົກປີ 2012-2013 ແລະ ກຳນົດທິດທາງແຜນສົກປີ 2013-2014 ທີ່ເມືອງພິນ ແຂວງ ສະຫວັນນະເຂດ ຄັ້ງວັນທີ 7-9 ຕຸລາ 2013, ຊື່ງກອງປະຊຸມສາມາດສະຫລຸບໄດ້ເປົ້າໝາຍດັ່ງນີ້:
   - ເນັ້ນຫນັກໃຫ້ອ້າຍນ້ອງວິຊາການຂັ້ນເມືອງຮູ້ຈັກນະໂຍບາຍຂອງໂຄງການ, ຮູ້ຈັກວາງແຜນຢູ່ໃນພື້ນທີ່ຂອງຕົນ ແລະ ຮູ້ຈັກກຳນົດງົບປະມານໃຫ້ສອດຄ່ອງກັບກິດຈະກຳຕົວຈີງ.
   - ສະແດງງົບປະມານທີ່ຍັງເຫຼືອຂອງແຕ່ລະອົງປະກອບພ້ອມຕີລາຄາດຳເນີນໂຄງການຂອງແຕ່ລະອົງປະກອບ.
8. ຕາງໜ້າ ທລຍ ເຂົ້າຮ່ວມກອງປະຊຸມຄົບຄະນະກຳມາທິການບັນດາເຜົ່າສະພາແຫ່ງຊາດ ຄັ້ງທີ 3 ທີ່ເມືອງຣົ່ມ ແຂວງ ວຽງຈັນ ຄັ້ງວັນທີ 29-30 ຕຸລາ 2013, ໂດຍກອງປະຊຸມດັ່ງກ່າວໄດ້ຕົກລົງບັນຫາສຳຄັນດັ່ງນີ້:
   - ສະຫລຸບຕີລາຄາກ່ຽວກັບການເຄື່ອນໄຫວຂອງສະພາໃນສົກ 2012-2013 ແລະ ທິດທາງແຜນການສົກປີ 2013-2014 ຂອງກຳມະທິການບັນດາເຜົ່າ ເພື່ອສຸມໃສ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ການຈັດສັນພູມລຳເນົາຄົງທີ່ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນບັນດາເຜົ່າຢຸດຕິການເຄື່ອນຍ້າຍຊະຊາຍຂອງພົນລະເມືອງ ລວມເຖິງວຽກງານຊົນເຜົ່າ ແລະ ສາດສະໜາ.
   - ຮ່າງດຳລັດວ່າດ້ວຍສາດສະໜາ ນອກນັ້ນໃຫ້ເລັ່ງໃສ່ການແກ້ໄຂຄວາມທຸກຍາກຂອງບັນດາຈຸດສຸມຂອງສູນກາງ, ທ້ອງຖິ່ນ ແລະ ອື່ນໆ.

## *ຄ. ພະແນກຕິດຕາມ - ປະເມີນຜົນ*

### *ຄ.1. ວຽກງານແຜນທີ່*

1. ສືບຕໍ່ສ້າງແຜນທີ່ ຮອບວຽນ 9-10 ຂອງ 10 ແຂວງ ທລຍ ( ລະດັບເມືອງ ) ຍັງ ແຂວງ ອັດຕະປື, ສະຫວັນນະເຂດ, ຫລວງພະບາງ, ສາລະວັນ ແລະ ແຂວງ ຊຽງຂວາງ.
2. ສ້າງແຜນທີ່ ສະແດງ ໃນເດືອນ ຕຸລາ 2013 ( ທີ່ຕັ້ງໂຄງການ ຂອງ ທລຍ I-II ( ຮອບວຽນ 1-10 ) ແລະ ແຜນທີ່ ໂຄງການຂອງ LUFSIP 3A Cycle 8-9 ແລະ 3B ແຜນທີ່ລະດັບປະເທດ.
3. ສະໜອງຂໍ້ມູນໃຫ້ຊ່ຽວຊານທີ່ມາຢ້ຽມຢາມຫ້ອງການ ທລຍ ສູນກາງ ມາຈາກຫ້ອງການ SDC Mr.Michle ແລະ ວິຊາການແຜນທີ່ GIS ຈາກກະຊວງກະສິກຳ ແລະ ໄດ້ແລກປ່ຽນຂໍ້ມູນນຳກັນ ( ທລຍ ສະໜອງຂໍ້ມູນ ທີ່ຕັ້ງໂຄງການ ຮອບວຽນ 6-10 ແລະ ໄດ້ຮັບຂໍ້ມູນ ທີ່ຕັ້ງບ້ານທົ່ວປະເທດ ປີ 2011).
4. ເຂົ້າຮັບຟັງການອະທິບາຍ ກ່ຽວກັບການປັບປຸງ ເວບໄຊ້ ຂອງ ທລຍ ເນັ້ນໃສ່ການເອົາແຜນທີ່ຂຶ້ນສະແດງຢູ່ ເວປໄຊ້ ທລຍ.

### *ຄ.2. ວຽກງານ ກສກ (ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ)*

1. ຕິດຕາມ ແລະ ຕອບຮັບ ຄຳຄິດເຫັນຜ່ານທາງອີເມລ, ສາຍດ່ວນ 161 ແລະ ການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານ ກສກ ໃນ 10 ແຂວງເປົ້າໝາຍຂອງ ທລຍ.
2. ເຮັດບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ ປະຈຳເດືອນ ຕຸລາ 2013.
3. ສະຫຼຸບ ແລະ ເຮັດບົດລາຍງານລວມ ຄວາມຄືບໜ້າຂອງໜ້າວຽກ ກສກ ຂອງ ປະຈຳເດືອນ ຕຸລາ 2013 ສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊຶ່ງໃນເດືອນ ກັນຍາ 2013 ນີ້ມີຈຳນວນຄາຄິດເຫັນທັງໝົດແມ່ນ 3,658 ຄຳຄິດເຫັນ ໃນນັ້ນ 1 ຄຳຄິດເຫັນແມ່ນໄດ້ຮັບຈາກ ຕູ້ຮັບຄຳຄິດເຫັນຈາກ 10 ແຂວງເປົ້າໝາຍ; 3,629 ຄຳຄິດເຫັນແມ່ນຈາກສາຍດ່ວນ 161 ແລະ 28 ຄຳຄິດເຫັນແມ່ນຈາກອີເມລ ຊຶ່ງຄຳຄິດເຫັນທີ່ໄດ້ຮັບຈາກສາຍດ່ວນ 161 ແລະ ອີເມລນັ້ນມີພຽງ 2 ຄຳຄິດເຫັນທີ່ກຽ່ວພັນກັບວຽກຂອງ ທລຍ ລາຍລະອຽດດັ່ງຕາຕະລາງລຸ່ມນີ້:

<u>ຕາຕະລາງສັງລວມຄຳຄິດເຫັນ ເດືອນ ຕຸລາ 2013</u>

| ຄຳຄິດເຫັນທີ່ໄດ້ຮັບ | ສາຍ ດ່ວນ161 | ອີ ເມລ | ຕູ້ຮັບຄຳຄິດເຫັນ | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | | ຊຂ | ຊກ | ອປ | ສວ | ຫຼທ | ສຂ | ຫພ | ຫຼບ | ອຊ | ພລ | ລວມ |
| ຕ້ອງການຂໍ້ມູນເພີ່ມເຕີມ | 1 | 1 | - | - | - | - | - | - | - | - | - | - | 1 |
| ຂໍທຶນຊ່ວຍເຫລືອ | - | - | - | - | - | - | - | - | - | - | - | - | - |
| ຂອບໃຈ ທລຍ | - | - | 1 | - | - | - | - | - | - | - | - | - | 1 |
| ຮ້ອງຮຽນກ່ຽວກັບວຽກ ທລຍ | 1 | - | - | - | - | - | - | - | - | - | - | - | 1 |
| ຄຳຄິດເຫນທີ່ບໍ່ກ່ຽວຂ້ອງກັບ ທລຍ | 3,627 | 27 | - | - | - | - | - | - | - | - | - | - | 3,655 |
| ລວມ | 3,629 | 28 | 1 | - | - | - | - | - | - | - | - | - | 3,658 |
| ລວມ ຄຳຄິດເຫັນທີ່ກ່ຽວກັບ ທລຍ | 2 | - | 1 | - | - | - | - | - | - | - | - | - | 3 |

ອີງຕາມຕາຕະລາງຂ້າງເທິງຄຳຄິດເຫັນທີ່ກ່ຽວຂ້ອງກັບ ທລຍ ແມ່ນມີ 3 ຄຳຄິດເຫັນໃນນັ້ນ ມີ 1 ຄຳຄິດເຫັນແມ່ນຄຳຮ້ອງຮຽນ ຜ່ານທາງສາຍດ່ວນ 161 ຈາກແຂວງ ສາລະວັນ ເມືອງຕະໂອ້ຍ ກຸ່ມໂຈລະ ບ້ານໂຈໃຕ້ ເນື່ອງຈາກຊຸມຊົນມີຄວາມຂ້ອງໃຈໃນໂຄງການກໍ່ສ້າງນ້ຳລິນ ເນື່ອງຈາກການຈັດຊື້ອຸປະກອນກໍ່ສ້າງນ້ຳ

ລົນດັ່ງກ່າວນັ້ນບໍ່ຄົບຕາມຈຳນວນ ປະຈຸບັນ, ບັນຫາດັ່ງກ່າວແມ່ນໄດ້ຮັບການແກ້ໄຂແລ້ວຈາກ ທລຍ ແຂວງ ສາລະວັນ ແລະ ຊຸມຊົນເອງກໍ່ພໍໃຈກັບການການແກ້ໄຂບັນຫາດັ່ງກ່າວ.

## *ຄ.3. ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS)*

1. ປະກອບສ່ວນໃນການກະກຽມຂໍ້ມູນ ເພື່ອວາງສະແດງໃນງານວັນສັບປະດາລຶບລ້າງຄວາມທຸກຍາກແຫ່ງຊາດ ເດືອນ ຕຸລາ 2013.
2. ລົງໄປຊ່ວຍແນະນຳທີມງານ ທລຍ 6 ແຂວງພາກເໜືອ (ຫລວງນ້ຳທາ, ຫລວງພະບາງ, ອຸດົມໄຊ, ຊຽງຂວາງ, ຫົວພັນ ແລະ ແຂວງ ຜົ້ງສາລີ) ໃນການລວບລວມຂໍ້ມູນ ແບບຟອມຕ່າງໆ ເພື່ອປ້ອນເຂົ້າໃນຖານຂໍ້ມູນ ແລະ ຕິດຕາມສະພາບການເຊື່ອມຕອິນເຕີເນັດ, ຝຶກອົບຮົມໃຫ້ພະນັກງານກັບທີ່ ໃນການປ້ອນຂໍ້ມູນຕົວຈິງ.

ຜ່ານການລົງປະຕິບັດວຽກຕົວເຮັດຕົວຈິງໃນ 6 ແຂວງ ດັ່ງກ່າວກໍ່ໄດ້ພົບບາງບັນຫາດັ່ງນີ້:

- ບົດສະເໜີໂຄງການຍ່ອຍບາງສ່ວນຍັງຄ້າງຢູ່ ທລຍ ສູນກາງ-ແຂວງບໍ່ມີຂໍ້ມູນເພື່ອປ້ອນເຂົ້າໃນລະບົບຖານຂໍ້ມູນໃດ້.
- ແບບຟອມບໍ່ໄດ້ຖືກນຳໃຊ້-ບໍ່ໄດ້ຖືກຮັບຮູ້ ເຊັ່ນ: ແບບຟອມການໄປຢ້ຽມຢາມໂຄງການຍ່ອຍ, ແບບຟອມການລົງຢ້ຽມຢາມກຸ່ມບ້ານ, ແບບຟອມທີມງານທລຍຂັ້ນກຸ່ມບ້ານ ແລະ ທີມງານທລຍຂັ້ນບ້ານ.
- ຂໍ້ມູນໄດ້ຖືກຕື່ມເຂົ້າໃນແບບຟອມ ບໍ່ຖືກຕ້ອງ-ບໍ່ຄົບຖ້ວນ-ບໍ່ທັນເວລາ.
- ຂໍ້ມູນທີ່ມີໃນ ບົດສະເໜີໂຄງການຍ່ອຍ ແລະ ຂໍ້ມູນໃນປຶ້ມວາງແຜນພັດທະນາບ້ານ ບໍ່ກົງກັນ.
- ຂໍ້ມູນບໍ່ມີ ໃນແບບຟອມການໄປຢ້ຽມຢາມໂຄງການຍ່ອຍ, ແບບຟອມທີມງານ ທລຍ ຂັ້ນກຸ່ມບ້ານ ແລະ ທີມງານທລຍຂັ້ນບ້ານ ເພາະບໍ່ມີການນຳໃຊ້ແບບຟອມ ເພື່ອການບັນທຶກຂໍ້ມູນດັ່ງກ່າວ.
- ຂໍ້ມູນຖືກບັນທຶກແບບຜິດພາດເຂົ້າໃສ່ໃນແບບຟອມເຊັ່ນ: ຈຳນວນຜູ້ເຂົ້າຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານ ບໍ່ຖືກຕ້ອງກັບເງື່ອນໄຂຂອງຕົວຊີ້ວັດ.
- ພະນັກງານຜູ້ປ້ອນຂໍ້ມູນມີການປ່ຽນເຂົ້າປ່ຽນອອກຫລາຍເກີນໄປ, ພະນັກງານຜູ້ປ້ອນຂໍ້ມູນບໍ່ໄດ້ຮັບການຝຶກອົບຮົມໃຫ້ເຂົ້າໃຈເລິກເຊິ່ງ ເພື່ອນຳໃຊ້ລະບົບຖານຂໍ້ມູນ MIS, ພະນັກງານແມ່ນພະນັກງານໃໝ່ຂາດປະສົບການໃນການປ້ອນຂໍ້ມູນເຮັດໃຫ້ວຽກງານຊັກຊ້າ.
- ການເຊື່ອມຕອິນເຕີເນັດມີຄວາມຊັກຊ້າ ມີຄວາມຫຍຸ້ງຍາກໃນການຮັບ ແລະ ສົ່ງຂໍ້ມູນຈາກ Server ທີ່ນະຄອນຫລວງວຽງຈັນ.
- ບ່ອນເກັບມ້ຽນເອກະສານຂໍ້ມູນບໍ່ມີ ມີຄວາມສ່ຽງຕການເກີດຄວາມເສຍຫາຍ.

## *ຄ.4. ວຽກງານວິໄຈ ແລະ ປະເມີນຜົນ*

ໃນໄລຍະ 1 ເດືອນຜ່ານມາ, ວຽກງານ ວິໄຈ ແລະ ປະເມີນຜົນ ໄດ້ຈັດຕັ້ງປະຕິບັດຽກງານຂອງຕົນຕາມພາລະບົດບາດ ແລະ ການມອບໝາຍຂອງທີມງານ ບໍລິຫານງານ ທລຍ ສູນກາງ ໃນດ້ານວິຊາສະເພາະ ແລະ ດ້ານສັງຄົມດັ່ງນີ້:

1. ***<u>ດ້ານວິຊາສະເພາະແມ່ນສຳເລັດໜ້າວຽກດັ່ງນີ້:</u>***

- ໄດ້ກວດກາ ແລະ ມີຄຳເຫັນຕໍ່ບັນດາຮ່າງແບບສອບຖາມ ການປະເມີນການສ້າງຄວາມເຂັ້ມແຂງໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ຂອງບໍລິສັດທີ່ປຶກສາ ມີໄຊເຕັກໂນ. ທີ່ມີການແກ້ໄຂໃນບາງຈຸດ ໂດຍອີງຕາມຄຳເຫັນຂອງທີມງານຜູ້ໃຫ້ທຶນ.
- ໄດ້ເຂົ້າຮ່ວມຮັບຟັງການລາຍງານຜົນການປະເມີນດ້ານເຕັກນິກ ແລະ ປະສິດທິຜົນດ້ານລົງທຶນຂອງໂຄງການຍ່ອຍທີ່ສະໜັບສະໜຸນໂດຍ ທລຍ ໃນຮອບວຽນ 9 ແລະ ຮອບວຽນ 10 ຊຶ່ງຈັດຕັ້ງປະຕິບັດໂດຍ ບໍລິສັດທີ່ປຶກສາ ລາວ-ອາຊີ.
- ໄດ້ຮ່ວມມືກັບໂຄງການ LONG ຈັດຝຶກອົບຮົມການນຳໃຊ້ລະບົບການຄຸ້ມຄອງຜົນກະທົບ ແລະ ຜົນໄດ້ຮັບເພື່ອຮັບໃຊ້ເຂົ້າໃນວຽກງານຂອງໂຄງການ LONG ໃຫ້ແກ່ພະນັກງານໂຄງການ LONG ຢູ່ເມືອງເຊໂປນ ແຂວງ ສະຫວັນນະເຂດ.
- ການສັງລວມຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດໂຄງການຍ່ອຍຂອງ ທລຍ ໄລຍະ2 ເພື່ອກະກຽມໃຫ້ແກ່ການປະເມີນເຄິ່ງໄລຍະການຈັດຕັ້ງປະຕິບັດໂຄງການ ເຊິ່ງຄາດວ່າຈະຖືກດຳເນີນການ ໃນຕົ້ນເດືອນມັງກອນ 2014. ເຖິງແນວໃດກໍ່ຕາມ ການກະກຽມຂໍ້ມູນດັ່ງກ່າວແມ່ນສຳເລັດພຽງແຕ່ 10 % ເທົ່ານັ້ນ (ຍັງບໍ່ມີຄວາມຄືບໜ້າເພີ່ມເຕີມ ເມື່ອທຽບກັບເດືອນກ່ອນ ຍ້ອນວ່າ ຕ້ອງການເວລາເພີ່ມເຕີມໃນການສັງລວມຂໍ້ມູນໃນລາຍລະອຽດເພື່ອການວິໄຈແບບຄຸນນະພາບ ແລະ ປະລິມານ) ແມ່ນຈະໄດ້ສືບຕໍ່ສັງລວມຕໍ່ໄປໃຫ້ສຳເລັດ.

## *ງ. ພະແນກບໍລິຫານ-ການເງິນ*

### *ງ.1. ວຽກງານຈັດຕັ້ງ*

1. ທົບທວນຄືນກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານທຸກໆຄົນ: ໄດ້ສຳເລັດການທວນຄືນກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານທຸກໆຄົນ ໃນເບື້ອງຕົ້ນເທົ່ານັ້ນ ແຕ່ການລົງລາຍລະອຽດ ແລະ ສະບັບທີ່ຕົກລົງເປັນອັນສຸດທ້າຍ ທີ່ຈະສາມາດນຳສົ່ງໃຫ້ພະນັກງານ ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດວຽກ ແມ່ນຄາດວ່າຈະໃຫ້ສຳເລັດພາຍຫລັງການປະເມີນຜົນການປະຕິບັດວຽກຂອງພະນັກງານ ປະຈຳປີ 2013.
2. ກະກຽມການປະເມີນຜົນການເຮັດວຽກຂອງພະນັກງານປະຈຳປີ ເພື່ອເປັນພື້ນຖານໃນການອອກສັນຍາໃໝ່: ໄດ້ສຳເລັດການການປັບປຸງແບບຟອມການປະເມີນຜົນພະນັກງານສຳລັບປີ 2013 ພ້ອມດຽວກັນກໍ່ໄດ້ມີການແຈກຢາຍ ແລະ ສົ່ງແຈ້ງການ ກ່ຽວກັບລາຍລະອຽດວິທີການປະເມີນ ແລະ ກຳນົດເວລາສົ່ງບົດປະເມີນຜົນກັບຄືນໃຫ້ໜ່ວຍງານຈັດຕັ້ງ ພາຍໃນວັນທີ 18 ພະຈິກ 2013, ຫລັງຈາກນັ້ນແມ່ນໃຫ້ເວລາຫົວໜ້າພະແນກຂັ້ນສູນກາງປະເມີນໃຫ້ສຳເລັດ ໃນວັນທີ 26 ພະຈິກ 2013 ແລະ ຜູ້ອຳນວຍການເປັນຜູ້ປະເມີນສຸດທ້າຍ ສຳເລັດ 30 ພະຈິກ 2013.
3. ກະກຽມຈັດຝຶກອົບຮົມ ຫົວຂໍ້ "ການຝຶກເພື່ອເປັນຄູຝຶກ" ໃຫ້ພະນັກງານຂັ້ນສູນກາງ: ໄດ້ມີການຕົກລົງເປັນເອກະພາບກັບຄະນະບໍລິຫານ ທລຍ ແລະ ພະນັກງານສູນກາງທັງໝົດ ກ່ຽວກັບກຳນົດໄລຍະເວລາຝຶກອົບຮົມແມ່ນຢູ່ໃນລະຫວ່າງ 9-20 ທັນວາ 2013.

4. ກະກຽມແຜນຈັດຈ້າງສຳລັບປີ 2014 ໂຄງການປັບປຸງຊີວິດການເປັນຢູ່ເພື່ອຄ້ຳປະກັນທາງດ້ານໂພສະນາການ: ໄດ້ສຳເລັດໜ້າວຽກດັ່ງກ່າວ ແລະ ໄດ້ສົ່ງໃຫ້ຜູ້ຮັບຜິດຊອບວຽກຈັດຊື້-ຈັດຈ້າງ ທລຍ ສູນກາງ ເພື່ອປະກອບເປັນແຜນລວມ ສົ່ງຂໍອະນຸມັດຈາກຜູ້ໃຫ້ທຶນ.
5. ກະກຽມແຜນວຽກຈັດຕັ້ງປະຈຳໄຕມາດ ຕຸລາ - ທັນວາ 2013: ໄດ້ສຳເລັດໜ້າວຽກດັ່ງກ່າວຕາມກຳນົດເວລາ ແລະ ໄດ້ປະກອບເຂົ້າໃນແຜນວຽກລວມຂອງໂຄງການ ທລຍ ເປັນທີ່ຮຽບຮ້ອຍແລ້ວ.
6. ຄວາມຄືບໜ້າກ່ຽວກັບຂະບວນການສັບຊ້ອນພະນັກງານ, ໄດ້ສຳເລັດການຄັດເລືອກພະນັກງານ ຕຳແໜ່ງຂ້າງລຸ່ມນີ້:

   **<u>ຂັ້ນສູນກາງ</u>**:

   1. ຜູ້ຮັບຜິດຊອບການລາຍງານ: ໄດ້ຮັບເຂົ້າມາປະຈຳການແລ້ວ
   2. ຜູ້ຮັບຜິດຊອບວຽກເສີມສ້າງຄວາມເຂັ້ມແຂງໃຫ້ສະຖາບັນທ້ອງຖິ່ນ: ປະຈຸບັນກຳລັງຢູ່ໃນຂັ້ນຕອນການຄັດຈ້ອນບັນຊີສັ້ນ ຂອງຄະນະກຳມະການຮັບຜິດຊອບການຄັດເລືອກພະນັກງານ.
   3. ຜູ້ຮັບຜິດຊອບວຽກກະຈາຍຂໍ້ມູນຂ່າວສານ-ສຶກສາ-ປະຊາສຳພັນ: ປະຈຸບັນກຳລັງຢູ່ໃນຂັ້ນຕອນການຄັດຈ້ອນບັນຊີສັ້ນ ຂອງຄະນະກຳມະການຮັບຜິດຊອບການຄັດເລືອກພະນັກງານ.

   **<u>ຂັ້ນແຂວງ:</u>**

   1. ພັດທະນາຊຸມຊົນປະຈຳແຂວງຫລວງນ້ຳທາ: ໄດ້ຮັບເຂົ້າມາປະຈຳການແລ້ວ
   2. ປະສານງານແຂວງ ປະຈຳແຂວງຜົ້ງສາລີ: ຈະດຳເນີນການປະກາດຮັບສະໝັກ ເລີ້ມແຕ່ວັນທີ 18 ພະຈິກ 2013 ເປັນຕົ້ນໄປ. ປະຈຸບັນຜູ້ທີ່ຮັກສາການແທນ ແມ່ນມອບໃຫ້ ທ່ານ ພົງລຳພັນ ລອດຄຳງາ ຊຶ່ງເປັນວິສະວະກອນແຂວງ ຮັບຜິດຊອບວຽກຊົ່ວຄາວ.

   **<u>ຂັ້ນເມືອງ:</u>**

   1. ສຳເລັດການຄັດເລືອກພະນັກງານພັດທະນາຊຸມຊົນ ປະຈຳເມືອງຊຳໃຕ້, ເມືອງໄຊ, ສຳພັນ, ສ່ວນຢູ່ເມືອງຈອມເພັດ ຍັງບໍ່ທັນໄດ້.
   2. ສຳເລັດການຄັດເລືອກພະນັກງານວິສະວະກອນ ປະຈຳເມືອງກະລຶມ, ໄຊ, ນາແລ, ຈອມເພັດ
   3. ສຳເລັດການຄັດເລືອກພະນັກງານບໍລິຫານ-ການເງິນ ປະຈຳເມືອງຈອມເພັດ, ສ່ວນຢູ່ເມືອງໄຊ ຍັງບໍ່ທັນໄດ້.
   4. ໄດ້ສຳເລັດການຄັດເລືອກຜູ້ປະສານງານ ໂຄງການ ຄປພ ປະຈຳເມືອງວຽງທອງ.

### *ງ.2. ວຽກງານຈັດຊື້-ຈັດຈ້າງ*

1. ຕິດຕາມການສ້ອມແປງຫ້ອງການ ທລຍ 5 ເມືອງ ແລະ ຫ້ອງການ ທລຍ ແຂວງ ຂອງແຂວງ ອຸດົມໄຊ ຄືບໜ້າໄປ 60 % ແລະ ຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດວຽກ.
2. ຕິດຕາມການປະມູນສົມທຽບລາຄາການ  ສ້ອມແປງຫ້ອງການ ທລຍ ເມືອງຂວາ ແລະ ຫ້ອງການ ທລຍ ແຂວງ ຂອງແຂວງ ຜົ້ງສາລີ ຄືບໜ້າ 40 % ຢູ່ໃນຂັ້ນຕອນການປະກາດ ແລະ ຍື່ນຊອງປະມູນໃຫ້ບໍລິສັດຜູ້ຮັບເໝົາ.

3. ສຳເລັດພິວພັນເອົາເອກະສານຂໍຈົດທະບຽນສັນຍາ ແລະ ເອກະສານຢັ້ງຢືນການເສຍອາກອນ ຈາກບໍລິສັດ ສຳລັບການຈັດຊື້ ກ້ອງຖ່າຍຮູບ ຈຳນວນ 64 ໜ່ວຍ ສຳລັບພະນັກງານວິຊາການຂອງ ທລຍ ແລ້ວດຳເນີນ ຂັ້ນຕອນການຂໍເບີກຈ່າຍແລ້ວ.
4. ສຳລັບການຈັດຊື້ອຸປະກອນການແພດ ຂອງບ້ານ ດາກປຣາຫລັກຊາວ ເມືອງດາກຈຶ່ງ ແຂວງເຊກອງ ຕາມ ການມອບສິດຂອງທີມງານກຸ່ມບ້ານ ແລະ ກຳລັງຢູ່ໃນຂັ້ນຕອນການຈັດສົ່ງສິນຄ້າຈາກແຂວງໄປຍັງກຸ່ມບ້ານ ແລະ ການຂໍເບີກຈ່າຍເງິນ ຄືບໜ້າໄປ 90 %.
5. ການຈັດຊື້ອຸປະກອນການຮຽນການສອນ ຂອງບ້ານປີໄຮ່, ເມືອງສະໜ້ອຍ ແຂວງ ສາລະວັນ ຄືບໜ້າໄປ 90 % ລໍຖ້າການຈ່າຍເງິນ ເພາະເປັນໂຄງການທຶນສົມທົບຈາກລັດຖະບານ.
6. ສຳລັບການປະມູນຈັດຊື້ ສຳລັບອຸປະກອນການແພດ ບ້ານລະໄກ, ເມືອງນອງ, ແຂວງ ສະຫວັນນະເຂດ ຄືບໜ້າໄປ 90 % ລໍຖ້າການຈ່າຍເງິນເພາະເປັນໂຄງການທຶນສົມທົບຈາກລັດຖະບານ.
7. ຕິດຕາມການກໍ່ສ້າງຂົວອູ່ 3 ແຫ່ງ ຂອງເມືອງນາແລ ແລະ ເມືອງລອງ ແຂວງ ຫລວງນ້ຳທາ ຄືບໜ້າໄປ 20 % ພວມດຳເນີນຂັ້ນຕອນການກໍ່ສ້າງ.
8. ຕິດຕາມການກໍ່ສ້າງຝາຍນ້ຳລົ້ນ ແລະ ຂົວຈົມ ຢູ່ກຸ່ມບ້ານນາລຳ ເມືອງໃໝ່ ແຂວງຜົ້ງສາລີ ຄືບໜ້າໄປ 10 % ພວມດຳເນີນຂັ້ນຕອນການກໍ່ສ້າງ.
9. ສຳເລັດການກະກຽມຂໍ້ມູນຕ່າງໆ ຂອງໂຄງການຍ່ອຍ ສຳລັບທຶນສົມທົບລັດຖະບານ ສົ່ງໃຫ້ຫົວໜ້າພະ ແນກບໍລິຫານ ແລະ ການເງິນ ເພື່ອສົ່ງຕໍໃຫ້ຜູ້ໃຫ້ທຶນ.
10. ສຳເລັດການປະມູນຈັດຊື້ເຄື່ອງໃຊ້ຫ້ອງການ ທລຍ ສູນກາງ
11. ຕິດຕາມການຂໍເບີກຈ່າຍໂຄງການຍ່ອຍຮອບວຽນ 9 ຄືບໜ້າໄປ 85 % ການເບີກຈ່າຍກຳລັງຢູ່ໃນງວດ 3.
12. ຕິດຕາມການຂໍເບີກຈ່າຍໂຄງການຍ່ອຍຮອບວຽນ 10 ຄືບໜ້າໄປ 30 % ການເບີກຈາຍຍັງຢູ່ງວດ 1.
13. ສັງລວມແບບສອບຖາມການປະເມີນວຽກງານການປະມູນຈັດຊື້ ໂຄງການຍ່ອຍ ສຳລັບແຂວງທົດລອງ (ຫລວງພະບາງ, ອຸດົມໄຊ ແລະຜົ້ງສາລີ) ຄືບໜ້າໄປ 20 % ຢູ່ໃນຂັ້ນຕອນສັງລວມ (ເປັນພາສາລາວ)
14. ສຳເລັດການດຳເນີນຂະບວນການວ່າຈ້າງບໍລິສັດທີ່ປຶກສາ ກ່ຽວກັບ Capacity Building Study ພາຍ ໃຕ້ໂຄງການ PRF ກັບບໍລິສັດ Mixai Techno Engineering & Consulting ໃນມູນຄ່າສັນຍາ 65,090 USD ໂດຍນຳໃຊ້ການປະມູນຮູບແບບ Consultant Qualification Selection.
15. ສຳເລັດການດຳເນີນຂະບວນການວ່າຈ້າງບໍລິສັດທີ່ປຶກສາ ກ່ຽວກັບ Technical Audit Component 3 ພາຍໃຕ້ໂຄງການ LUFSIP ກັບບໍລິສັດ Lao-Asia Consulting Group ໃນມູນຄ່າສັນຍາ 63,155 USD ໂດຍນຳໃຊ້ການປະມູນຮູບແບບ Consultant Qualification Selection.
16. ສຳເລັດການກຽມແຜນຈັດຊື້ປະຈຳປີ 2014 ພາຍໃຕ້ໂຄງການ LONG ສົ່ງໃຫ້ທະນາຄານໂລກແລ້ວ ວັນທີ 28 ຕຸລາ 2013.

### *ງ.3. ວຽກງານການເງິນ*

1. ສຳເລັດການສະຫລຸບບັນຊີ ການເງິນປະຈຳເດືອນ ກັນຍາ 2013.
2. ລົງກວດກາວຽກງານເອກະສານ ການເງິນ ແລະ ແນະນຳວຽກງານບໍລິຫານການເງິນທີ່ ແຂວງ ເຊກອງ ຄັ້ງ ວັນທີ 14-15 ແລະ ອັດຕະປື 16-18 ຕຸລາ 2013 ສຳລັບແຂວງ ເຊກອງ ພາຍຫລັງການລົງເຮັດວຽກນຳ ທີມງານ ແຂວງດັ່ງກ່າວເຫັນວ່າ, ສາມາດເຮັດວຽກໄດ້ດີເຖິງແມ່ນຈະເຂົ້າຮັບຜິດຊອບວຽກ ໄດ້ໄລຍະ

ໃດຫນຶ່ງ, ແຕ່ກໍ່ຍັງມີບາງຫນ້າວຽກທີ່ຜູ້ກ່ຽວຍັງຂາດປະສົບການ ແລະ ຈະຕ້ອງໄດ້ຮຽນຮູ້ເພີ່ມເຕີມເຊັ່ນ, ການຈັດເກັບເອກະສານການເງິນຕ່າງໆ, ຮູບແບບການນຳ ເອກະສານ ແລະ ການຄຸ້ມຄອງທີມງານບໍລິຫານ-ການເງິນເມືອງ ຕກັບບັນຫາດັ່ງກ່າວທາງ ທລຍ ແຂວງ ຈຶ່ງສະເໜີເອົາຜູ້ກ່ຽວໄປຖອດຖອນບົດຮຽນນຳແຂວງອື່ນໆ ເພື່ອເປັນການເສີມສ້າງຄວາມເຂັ້ມແຂງໃຫ້ກັບພະນັກງານ ແລະ ເພື່ອຄວາມເປັນເອກະພາບທາງດ້ານການເຮັດວຽກບໍລິຫານ-ການເງິນ. ທາງດ້ານແບບຟອມຕ່າງໆເຫັນວ່າ, ຜ່ານການເບິ່ງ ເອກະສານຕົວຈິງໃນຂັ້ນແຂວງ ແລະ ຂັ້ນເມືອງ ເຫັນວ່າຈຳເປັນຕ້ອງໄດ້ມີການປັບປຸງເພື່ອຄວາມສອດຄ່ອງກັບການຊົມໃຊ້ເຊັ່ນ: ແບບຟອມສະສາງເງິນລ່ວງຫນ້າ, ແບບຟອມສະຫລຸບເງິນໂຄງການຍ່ອຍປະຈຳງວດ, ແບບຟອມເບີກຈ່າຍແຊັກ, ແບບຟອມການຂຶ້ນງົບປະມານກິດຈະກຳ ແລະ ອື່ນໆ.

ສຳລັບແຂວງ ອັດຕະປື ເຫັນວ່າ, ເອກະສານການເງິນມີຄວາມຄົບຖ້ວນຕາມລາຍການ ທີ່ໄດ້ເຮັດລົງບັນຊີທັງຫມົດ, ແຕ່ເອກະສານສ່ວນໃຫຍ່ແມ່ນຍັງບໍ່ໄດ້ເອົາເຂົ້າແຟ້ມເພື່ອເກັບມ້ຽນ, ເນື່ອງຈາກວ່າບ່ອນເກັບມ້ຽນ ຫລື ຕູ້ເກັບເອກະສານນັ້ນມີບໍ່ພຽງພໍ, ປະກອບກັບຫ້ອງການ ທລຍ ແຂວງ ອັດຕະປືຄັບແຄບເມື່ອທຽບກັບຫ້ອງການ ທລຍ ແຂວງ ເຊກອງ ນອກຈາກນັ້ນແລ້ວໃນເວລາເຮັດວຽກ ຢູ່ແຂວງບາງຄັ້ງແມ່ນມີປະກົດການໄຟຟ້າດັບເລື້ອຍໆ, ເຊິ່ງເປັນເຫດການທີ່ເກີດຂຶ້ນປົກກະຕິໃນແຕ່ລະມື້ ເຮັດໃຫ້ຫຍຸ້ງຍາກໃນການເຮັດວຽກ ແລະ ອຸປະກອນເຄື່ອງໃຊ້ຫ້ອງການເປ່ເພເປັນປະຈຳ.

3. ສຳເລັດການສະສາງເງິນປະຈຳເດືອນ ກັນຍາ 2013.

## ຈ. *ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ (ໂຄງການ LONG)*

### ຈ.1 *ວຽກບໍລິຫານ ແລະ ແຜນການ*

1. ຈັດກອງປະຊຸມ ທົບທວນຄືນ ຄູ່ມືຈັດຕັ້ງປະຕິບັດໂຄງການ LONG: ສຳເລັດໄດ້ 6 ບົດ ຈາກທັງໝົດ 11 ບົດ.
2. ລົງຈັດຕັ້ງ ການສ້າງລະບົບການຕິດຕາມປະເມີນຜົນ ຢູ່ເຊໂປນ (MIS).
3. ສັງລວມບົດລາຍງານຄວາມຄືບຫນ້າກິດຈະກຳປະຈຳໄຕມາດ.
4. ຈັດຕັ້ງ ການລົງຕິດຕາມຄວາມຄືບໜ້າໂຄງການ ຢູ່ເມືອງວຽງທອງແຂວງຫົວພັນ ພ້ອມດ້ວຍຄະນະທີ່ປຶກສາຈາກທະນາຄານໂລກເຊິ່ງມີການ ສົນທະນາກຸ່ມໂພສະນາການ, ການສາທິດການເຮັດຂະໜົມເພື່ອສ້າງລາຍຮັບຂອງສູນ, ການຢ້ຽມຊົມກິດຈະກຳໂຄງການຍ່ອຍ, ການທົດລອງຄວາມເຂົ້າໃຈຕໍ່ໜັງສືສັນຍາໂຄງການ LONG ແລະ ທົບທວນຄືນ 23 ຂັ້ນຕອນການຈັດຕັ້ງປະຕິບັດໂຄງການ ໃຫ້ພະນັກງານກຸ່ມບ້ານຂອງໂຄງການ.
5. ສຳພາດເອົາພະທທີ່ປຶກສາ ດ້ານການສຶກສາ ການຕະຫຼາດ.

### ຈ.2 *ວຽກໂພສະນາການ*

1. ສືບຕໍ່ຮ່າງບັນທຶກຄວາມເຂົ້າໃຈ MOU ຮ່ວມກັບກະຊວງສາທາລະນະສຸກ.
2. ສຳເລັດຊຸດຝຶກອົບຮົມຄຸ້ມຄອງບໍລິຫານໃຫ້ສະໂມສອນໂພຊະນາການບ້ານ ແລະ ຄຸ້ມຄອງບໍລິຫານທຶນໝູນວຽນກິດຈະກຳລາຍຮັບສະໂມສອນໂພຊະນາການບ້ານໃຫ້ພະນັກງານ LONG ເມືອງເຊໂປນ ແຂວງສະຫວັນນະເຂດ ຜູ້ເຂົ້າຮ່ວມທັງໝົດ 25 ຄົນ ຍິງ 10 ຄົນ.

3. ສຳເລັດຊຸດອົບຮົມກິດຈະກຳລາຍຮັບໃຫ້ສະມາຊິກສະໂມສອນໂພຊະນາການບ້ານ ເມືອງວຽງທອງ ແລະ ເມືອງເຊໂປນ ກ່ຽວກັບຕັດຫຍິບຜູ້ເຂົ້າຮ່ວມເປັນຍິງທັງໝົດ 9 ຄົນ.
4. ສຳເລັດຊຸດຝຶກອົບຮົມການປຸງແຕ່ງອາຫານກິດຈະກຳລາຍຮັບເຊັ່ນ: ການເຮັດນ້ຳສະໝູນໄພ, ນ້ຳເຕົ້າຮູ້, ຂະໜົມໝາກອຶ, ຈືນກ້ວຍ, ກະແລ້ມຖົ່ວເຫຼືອງ ແລະ ອື່ນໆ (ລະອຽດໃຫ້ເບິ່ງຢູ່ບົດລາຍງານ ຝຶກອົບຮົມການປຸງແຕ່ງອາຫານ ແລະ ແປຮູບຜະລິດຕະພັນກະສິກຳ ເມືອງວຽງທອງ ແລະ ເຊໂປນ) ຂອງສະມາຊິກສະໂມສອນໂພຊະນາການບ້ານ, 6 ບ້ານ (ບ້ານແທນຮິງ, ບ້ານຫວຍສາ, ສາກົກ, ຫ້ວຍຖູນບ້ານສະແກງ, ບ້ານແກ້ງກອິ) ເມືອງວຽງທອງ ແລະ ເມືອງເຊໂປນ, ຜູ້ເຂົ້າຮ່ວມເປັນຍິງທັງໝົດ 133 ຄົນ.
5. ເຂົ້າຮ່ວມກອງປະຊຸມ ທົບທວນຄືນ ຄູ່ມືຈັດຕັ້ງປະຕິບັດໂຄງການ LONG ແລະ ຮ່ວມກັບຄະນະຢ້ຽມຢາມຄວາມຄືບໜ້າຂອງໂຄງການ ຢູ່ເມືອງວຽງທອງແຂວງຫົວພັນ ພ້ອມດ້ວຍຄະນະທີ່ປຶກສາຈາກທະນາຄານໂລກ.

### *ຈ.3 ວຽກປັບປຸງຄຸນນະພາບຊີວິດການເປັນຢູ່*

1. ຈັດສັນ ແລະ ກະກຽມຜະລິດຕະພັນຂອງຊາວບ້ານເຊັ່ນ: ສິ້ນໝີ່, ຜ່າບ່ຽງ ທີ່ຈະໄດ້ໄປວາງສະແດງວັນຫັດຖະກຳຂອງແຂວງຫົວພັນທີ່ເມືອງຊຳເໜືອ ໃນເດືອນ ຕຸລາ 2013.
2. ຈັດຕັ້ງປະຕິບັດຫ້ອງວາງສະແດງ ແລະ ຫ້ອງຂາຍສິນຄ້າຜະລິດຕະພັນຊາວບ້ານໃຫ້ແກ່ສະຫະພັນແມ່ຍິງເມືອງ ວຽງທອງ ແຂວງ ຫົວພັນ.
3. ເຂົ້າຮ່ວມກອງປະຊຸມ ທົບທວນຄືນ ຄູ່ມືຈັດຕັ້ງປະຕິບັດໂຄງການ LONG ແລະ ຮ່ວມກັບຄະນະຢ້ຽມຢາມຄວາມຄືບໜ້າຂອງໂຄງການ ຢູ່ເມືອງວຽງທອງ ແຂວງຫົວພັນ ພ້ອມດ້ວຍຄະນະທີ່ປຶກສາຈາກທະນາຄານໂລກ.

## *VI. ແຜນດຳເນີນງານ ແຕ່ວັນທີ 01-31 ພະຈິກ 2013 ຂອງແຕ່ລະພະແນກ*

### *ກ. ພະແນກພັດທະນາຊຸມຊົນ*

### *ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ*

1. ລົງຕິດຕາມ ແລະ ເຂົ້າຮ່ວມກອງປະຊຸມ ທົບທວນແຜນພັດທະນາຂັ້ນບ້ານ ແລະ ກຸ່ມບ້ານ ຢູ່ບາງເມືອງຂອງແຂວງ ຜົ້ງສາລີ.
2. ເຂົ້າຮ່ວມການຈັດກອງປະຊຸມ ປະສານງານການວາງແຜນຂັ້ນເມືອງ ຢູ່ໃນບາງແຂວງເຊັ່ນ: ແຂວງ ຊຽງຂວາງ, ຫລວງພະບາງ, ຫລວງນ້ຳທາ, ສະຫວັນນະເຂດ ແລະ ແຂວງ ສາລະວັນ.
3. ຊ່ວຍພະແນກວິສະວະກຳ ໃນການຮ່າງເນື້ອໃນ ການຄຸ້ມຄອງ-ນຳໃຊ້ ໂດຍສະເພາະກົດລະບຽບ ແລະການສ້າງຕັ້ງກອງທຶນບູລະນະຮັກສາ ສຳລັບບາງປະເພດໂຄງການຍ່ອຍທີ່ ທລຍ ສະໜັບສະໜູນ.
4. ຕິດຕາມຊຸກຍູ້ ແຕ່ລະເມືອງ ແຕ່ລະແຂວງ ໃນການປັບປຸງລະບົບການເກັບມ້ຽນເອກະສານ ໂດຍອີງໃສ່ຂໍ້ແນະນຳທີ່ ທາງພະແນກວາງອອກ.

### *ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ:*

1. ສົ່ງຂ່າວໃຫ້ວິທະຍຸແຫ່ງຊາດ, ກົມຂ່າວສານແມ່ຍິງລາວ ແລະ ໜັງສືພິມຕ່າງໆໃຫ້ໄດ້ 10 ຂ່າວ.
2. ກະກຽມຜູ້ທີ່ຈະເຂົ້າຮ່ວມລາຍການ ລຸງສ້າງ-ລຸງສາ ພາຍໃຕ້ຫົວຂໍ້ວິທີການຈັດຊື້-ຈັດຈ້າງ ໂຄງການຍ່ອຍສຳລັບຮອບວຽນທີ 11.

3. ປະສານສົມທົບ ກັບ ພະແນກວິສະວະກຳ ແລະ ພະແນກບໍລິຫານການເງິນ ໃນການກະກຽມຜະລິດຟິມ ສາລະຄະດີກ່ຽວກັບການຄຸ້ມຄອງໂຄງການຍ່ອຍ ແລະ ການຈັດຊື້ຈັດຈ້າງໂດຍຊຸມຊົນ.

*ກ.3 ບົດບາດຍິງ - ຊາຍ*

ມີແຜນການຈັດຝຶກອົບຮົມ ກ່ຽວກັບວຽກງານບົດບາດຍິງ-ຊາຍ ແລະ ການເຂົ້າຮ່ວມ ກິດຈະກຳ ທາງສັງຄົມ ຂຶ້ນ 3 ຊຸດ. ຊຸດທີ່ໜຶ່ງສຳລັບພະນັກງານ ລະດັບບໍລິຫານໂຄງການ ໃນນັ້ນລວມມີຄະນະ ບໍລິຫານໂຄງການຂັ້ນສູນກາງ ແລະ ຜູ້ປະສານງານ ທລຍ ຂັ້ນແຂວງ, ສ່ວນຊຸດທີສອງ ແລະ ຊຸດທີສາມ ສຳລັບພະນັກງານວິຊາການ ທີ່ຮັບຜິດຊອບແຕ່ລະໜ້າວຽກ ຢູ່ຂັ້ນແຂວງ ຫຼື ຜູ້ທີ່ໄດ້ລົງເລິກ ໃນການຈັດຕັ້ງ ປະຕິບັດວຽກງານຕົວຈິງຢູ່ພາກສະໜາມ ເຊິ່ງຊຸດຝຶກອົບຮົມຕາມຄັ້ງວັນທີດັ່ງລຸ່ມນີ້:

ຊຸດທີ 1: ວັນທີ 20-21 ພະຈິກ 2013.

ຊຸດທີ 2: ວັນທີ 25-27 ພະຈິກ 2013.

ຊຸດທີ 3: ວັນທີ 28-30 ພະຈິກ 2013.

*ຂ. ພະແນກວິສະວະກຳ*

1. ສືບຕໍ່ປຶກສາຫາລືກັບກະຊວງສຶກສາທິການ ສຳລັບວຽກຮ່ວມມືກັບກົມອາຊີວະສຶກສາກ່ຽວກັບການສ້າງ ວິຊາການຂັ້ນບ້ານ.
2. ສືບຕໍ່ວຽກງານຄວບຄຸມຄຸນນະພາບ.
3. ສັງລວມງົບປະມານຮອບວຽນ 11 ໃສ່ຕາຕະລາງສັງລວມ.
4. ຮ່າງປື້ມຄູ່ມືຝຶກອົບຮົມກ່ອນການຈັດຕັ້ງປະຕິບັດ ແລະ ຝຶກອົບຮົມຄຸ້ມຄອງການນຳໃຊ້ ແລະ ບົວລະ ບັດຮັກສາໂຄງການຍ່ອຍດ້ານພື້ນຖານໂຄງລ່າງ.
5. ຂຶ້ນແຜນເອົາວິຊາການຂັ້ນແຂວງ ແລະ ເມືອງ ຈາກແຂວງ ຫລວງນ້ຳທາ, ຫລວງພະບາງ, ອຸດົມໄຊ, ຫົວພັນ, ຊຽງຂວາງ ແລະ ແຂວງຜົ້ງສາລີ ເພື່ອຢ້ຽມຢາມ ແລະ ຖອດຖອນບົດຮຽນຈາກແຂວງ ອັດຕະ ປື ແລະ ແຂວງ ສະຫວັນນະເຂດ, ເຊກອງ, ອັດຕະປື ແລະ ຈາກແຂວງ ສາລະວັນເພື່ອຢ້ຽມຢາມແລະ ຖອດຖອນບົດຮຽນຈາກແຂວງ ຫົວພັນ.
6. ຂຶ້ນແຜນຝຶກອົບຮົມວິຊາຄຸ້ມຄອງສັນຍາກໍ່ສ້າງ.

*ຄ. ພະແນກຕິດຕາມ-ປະເມີນຜົນ*

*ຄ.1. ວຽກງານແຜນທີ່*

1. ສືບຕໍ່ສ້າງແຜນທີ່ ຮອບວຽນ 9-10 ຂອງ 10 ແຂວງ ທລຍ ( ລະດັບເມືອງ ).
2. ສ້າງແຜນທີ່ຕັ້ງໂຄງການ ຂອງ ທລຍ I ( ຮອບວຽນ 4, 5 )
3. ກະກຽມພິມແຜນທີ່ ຂະໜາດ A3 ແລະ ຊອກລາຍລະອຽດກ່ຽວກັບ ຊອບແວ Google Earth Pro ເພື່ອນຳໃຊ້ເຂົ້າໃນວຽກງານ ແຜນທີ່ GIS.

*ຄ.2. ວຽກງານ ກສກ (ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ)*

1. ຕິດຕາມ ແລະ ຕອບຮັບ ຄຳຄິດເຫັນຜ່ານທາງອີເມລ, ສາຍດ່ວນ 161 ແລະ ການລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດວຽກງານ ກສກ ໃນ 10 ແຂວງເປົ້າໝາຍຂອງ ທລຍ.

2. ສະຫຼຸບ ແລະ ເຮັດບົດລາຍງານລວມ ຄວາມຄືບໜ້າຂອງໜ້າວຽກ ກສກ ປະຈຳເດືອນ ພະຈິກ 2013 ສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ.
3. ສືບຕໍ່ຕິດຕາມການລາຍງານຄວາມຄືບໜ້າຂອງການຕິດຕັ້ງຕູ້ສະແດງຄຳຄິດຄຳເຫັນໃນ 3 ແຂວງໃໝ່ ແຂວງຫລວງພະບາງ, ອຸດົມໄຊ ແລະ ແຂວງ ຜົ້ງສາລີ.
4. ກະກຽມບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ ປະຈຳເດືອນ ພະຈິກ 2013.

### *ຄ.3. ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS)*

1. ຕິດຕາມການປ້ອນຂໍ້ມູນເຂົ້າໃນຖານຂໍ້ມູນຂອງທີມງານ ທລຍ ຂັ້ນແຂວງ.
2. ສືບຕໍ່ພັດທະນາລະບົບຖານຂໍ້ມູນເພື່ອຄວາມສະດວກໃນການປ້ອນຂໍ້ມູນ, ການເກັບຮັກສາ ແລະ ການນຳໃຊ້.

### *ຄ.4. ວຽກງານວິໄຈ ແລະ ປະເມີນຜົນ*

1. ສືບຕໍ່ຕິດຕາມການປະເມີນການສ້າງຄວາມເຂັ້ມແຂງ ໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນຂອງບໍລິສັດທີ່ປຶກສາ ມີໄຊເຕັກໂນ.
2. ຕິດຕາມເອົາບົດລາຍງານຜົນການປະເມີນຜົນ ດ້ານປະສິດທິຜົນການຈັດຕັ້ງປະຕິບັດໂຄງການ ຂອງທີມງານບໍລິສັດທີ່ປຶກສາ ລາວ-ອາຊີ.
3. ສືບຕໍ່ຮ່າງພາລະບົດບາດ (ToR) ການປະເມີນຄວາມຍືນຍົງຂອງໂຄງການຢູ່ບັນດາແຂວງເປົ້າໝາຍເກົ່າຂອງ ທລຍ ເຊິ່ງໄດ້ສຳເລັດການຈັດຕັ້ງປະຕິບັດໃນປີ 2008 (ເມືອງ ແອດ ແລະ ເມືອງສົບເບົາ ແຂວງຫົວພັນ, ເມືອງບາຈຽງ, ສຸຂຸມມາ, ມູນລະປະໂມກ, ປະທຸມພອນ ແລະ ເມືອງໂຂງ ແຂວງຈຳປາສັກ) ເຊິ່ງຄາດວ່າຈະໃຫ້ສາມາດດຳເນີນການໄດ້ໃນເດືອນ ກຸມພາ 2014 ທີ່ຈະມາເຖິງນີ້.
4. ສັງລວມ ແລະ ວິໄຈ ແຜນການຈັດຕັ້ງປະຕິບັດວຽກງານ ທລຍ ໃນສົກປີ 2013 -2014.
5. ຈັດຕັ້ງປະຕິບັດໜ້າທີ່ຕາມພາລະບົດບາດຂອງຕົນ ແລະ ການມອບໝາຍຂອງຄະນະບໍລິຫານງານ ທລຍ.

## *ງ. ພະແນກບໍລິຫານ- ການເງິນ*

### *ງ.1. ວຽກງານຈັດຕັ້ງ*

1. ຊອກຫາຂໍ້ມູນອ້າງອີງ ກ່ຽວກັບອັດຕາເງິນເຟີ້, ຄ່າຄອງຊີບ ແລະ ອື່ນໆ ເພື່ອເປັນຂໍ້ມູນອ້າງອີງໃນການກຳນົດການເໜັງຕີງຂອງອັດຕາເງິນດືອນພະນັກງານ ໃນປີ 2014.
2. ກວດກາ ແລະ ສັງລວມການປະເມີນຜົນການເຮັດວຽກຂອງພະນັກງານ ໃນແຕ່ລະຂັ້ນ ເພື່ອຮັບປະກັນໃຫ້ສອດຄ່ອງກັບລະບຽບຫລັກການ ແລະ ດຳເນີນໄປຕາມວິທີການ ແລະ ຂັ້ນຕອນ ທີ່ແນະນຳໂດຍໂຄງການ ທລຍ.
3. ສືບຕປະກາດຮັບສະໝັກພະນັກງານ ໃນແຕ່ລະຂັ້ນ ຕາມຕຳແໜ່ງດັ່ງລຸມນີ້:
   - ຜູ້ປະສານງານ ທລຍ ແຂວງຜົ້ງສາລີ
   - ພັດທະນາຊຸມຊົນ ປະຈຳເມືອງຈອມເພັດ
   - ບໍລິຫານ-ການເງິນ ປະຈຳເມືອງໄຊ

- ພະນັກງານ ຄປພ ຕຳແໜ່ງຜູ້ປະສານງານ, ວິຊາການດ້ານໂພຊະນາການ, ວິຊາການດ້ານປັບປຸງຊີວິດການເປັນຢູ່ ປະຈຳຢູ່ເມືອງຊຽງຄໍ້, ຊຳໃຕ້ (ແຂວງຫົວພັນ), ເມືອງນອງ (ແຂວງສະຫວັນນະເຂດ). ເມືອງລະ 3 ຕຳແໜ່ງ.

4. ຕິດຕາມແຜນ ແລະ ຂະບວນການຝຶກອົບຮົມ ຊຶ່ງຈະຈັດຂຶ້ນໂດຍພະແນກຕ່າງໆ ຢູ່ພາຍໃນຫ້ອງການ ທລຍ.
5. ດຳເນີນການປະເມີນຜົນພະນັກງານ-ລັດຖະກອນ ຕາມລະບຽບ ແລະ ນະໂຍບາຍ ທີ່ກົມຈັດຕັ້ງ-ພະນັກງານ ຫ້ອງວ່າການລັດຖະບານວາງອອກ. ກຳນົດສົ່ງໃຫ້ຫ້ອງການ ຄພທສ ວັນທີ 22 ພະຈິກ 2013.
6. ສືບຕປະຕິບັດວຽກປະຈຳວັນ ແລະ ທົ່ວໄປອື່ນໆ.

### ງ.2. ວຽກງານຈັດຊື້ຈັດຈ້າງ

1. ຕິດຕາມການປະມູນຕູ້ເຮັດນໍ້າຮ້ອນ-ນໍ້າເຢັນ ສະໜອງໃຫ້ຫ້ອງການ ທລຍ ເມືອງ 5 ເມືອງ ແລະ ຫ້ອງການ ທລຍ ແຂວງ, ແຂວງຫລວງພະບາງ.
2. ຕິດຕາມການດຳເນີນຂັ້ນຕອນການປະມູນສົມທຽບລາຄາ ການສ້ອມແປງຫ້ອງການ ທລຍ ເມືອງ ຂວາ ແລະ ຫ້ອງການ ທລຍ ແຂວງ ຜົ້ງສາລີ.
3. ຕິດຕາມການຈັດສົ່ງອຸປະກອນການແພດ ຂອງບ້ານດາກປຣາຫລັກຊາວ ເມືອງດາກຈຶງ ແຂວງ ເຊກອງ.
4. ຕິດຕາມການຈັດຕັ້ງປະຕິບັດການກໍ່ສ້າງຂົວອູ່ 3 ແຫ່ງ ຂອງເມືອງລອງ ແລະ ເມືອງນາແລ ແຂວງ ຫລວງນໍ້າທາ.
5. ຕິດຕາມການຈັດຕັ້ງປະຕິບັດການກໍ່ສ້າງຝາຍນໍ້າລົ້ນ ແລະ ຂົວຈົມບ້ານ ນາລໍາ ເມືອງ ໃໝ່ ແຂວງ ຜົ້ງສາລີ
6. ກະກຽມແຜນການຈັດຕັ້ງປະຕິບັດ ແລະ ສັງລວມໂຄງການຍ່ອຍທີ່ຈະດຳເນີນຂັ້ນຕອນການປະມູນ.
7. ສັງລວມແບບສອບຖາມການປະເມີນວຽກງານການປະມູນຈັດຊື້ໂຄງການຍ່ອຍສຳລັບແຂວງທົດລອງ (ຫລວງພະບາງ, ອຸດົມໄຊ ແລະຜົ້ງສາລີ).
8. ຕິດຕາມການຂໍເບີກຈ່າຍໂຄງການຍ່ອຍຮອບວຽນ 9 ແລະ 10.
9. ຕິດຕາມການອະນຸມັດຈັດຊື້ເຄື່ອງອຸປະກອນ ພາຍໃຕ້ໂຄງການ LUFSIP ຈາກທະນາຄານໂລກ.
10. ກຽມແຜນຈັດຊື້ປະຈຳປີ 2014 ພາຍໃຕ້ໂຄງການ PRF ສົ່ງຂໍອະນຸມັດກັບທະນາຄານໂລກ.
11. ສັງລວມຕາຕະລາງຕິດຕາມຄວາມຄືບໜ້າຂອງການປະມູນໂຄງການຍ່ອຍ ຮອບວຽນ 10 ສົ່ງໃຫ້ທະນາຄານໂລກ ເພື່ອລົງກວດກາເອກະສານ.

### ງ.3. ວຽກງານການເງິນ

1. ເຮັດບົດລາຍງານ ປະຈຳໄຕມາດເດືອນ ກໍລະກົດ, ສິງຫາ, ກັນຍາ 2013 ສົ່ງໃຫ້ຜູ້ໃຫ້ທຶນ.
2. ເອກກະສານຄ່ຽນເງິນປະຈຳເດືອນ ຕຸລາ 2013.
3. ພົວພັນກັບໜ່ວຍງານກວດສອບພາຍນອກ, ກ່ຽວກັບເອກະສານຕ່າງໆ ທີ່ກ່ຽວຂ້ອງເພື່ອກວດສອບ.
4. ເຮັດແຈ້ງການ ກ່ຽວກັບການຄິດໄລ່ງົບປະມານ ແລະ ເກັບກຳກ່ຽວກັບໄລຍະທາງ ແຕ່ລະເມືອງລົງຫາບ້ານ.
5. ສັງລວມປື້ມຄູ່ມືບໍລິຫານ ການເງິນ (ສະບັບພາສາລາວ).
6. ສືບຕໍ່ຕິດຕາມທຶນສົມທົບຂອງລັດຖະບານ 16 ຕື້ກີບ.
7. ດັດແກ້ແຜນງົບປະມານຂອງ ທລຍ 2.

## ຈ. *ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພສະນາການ (ໂຄງການ LONG)*

### ຈ.1 *ວຽກບໍລິຫານ ແລະ ແຜນການ*

1. ສືບຕໍ່ຈັດກອງປະຊຸມ ທົບທວນຄືນ ຄູ່ມືຈັດຕັ້ງປະຕິບັດໂຄງການ LONG.
2. ຂໍອະນຸມັດ  ແຜນວຽກແລະງົບປະມານປະຈຳປີທີ່ປະກອບມີ (ແຜນການສືບຕໍ່ຈັດຕັ້ງປະຕິບັດຢູ່ບ້ານເປົ້າຫມາຍທົດລອງ 6 ບ້ານເກົ່າ (ບ້ານແທນຣິງ, ບ້ານຫອຍສາ, ບ້ານນ້ຳສາດ, ບ້ານຫົວພູ, ບ້ານສະແກງ, ບ້ານແກ້ງກີ່), ແຜນຂະຫຍາຍຮອບວຽນ 2 ຈຳນວນ 44 ບ້ານ, ແຜນການຂະຫຍາຍຮອບວຽນທີ 3 ຈຳນວນ 80 ບ້ານ, ແຜນການສ້າງຄວາມເຂັ້ມແຂງແກ່ພະນັກງານໂຄງການ, ແຜນການຈັດຊື້ຈັດຈ້າງແລະປະກອບພະນັກງານ, ແຜນການພັດທະນາເຄື່ອງມືການສື່ສານນຳທະນາຄານໂລກ.
3. ລົງຈັດຕັ້ງລະບົບ ການຕິດຕາມປະເມີນຜົນ (MIS) ຢູ່ເມືອງວຽງທອງ ແຂວງຫົວພັນ.

### ຈ.2 *ວຽກໂພສະນາການ*

1. ປັບປຸງເອກະສານແນະນຳໂຄງການກ່ຽວກັບຂໍ້ມູນການເກັບກຳຂໍ້ມູນ (PRA) ດ້ານໂພຊະນາການ.
2. ກະກຽມແຜນຈັດຕັ້ງປະຕິບັດສະໂມສອນໂພຊະນາການບ້ານ 6 ບ້ານ (ບ້ານແທນຣິງ, ບ້ານຫອຍສາ, ສາກົກ, ຫ້ວຍຄູນບ້ານສະແກງ, ບ້ານແກ້ງກວີ) ຂອງເມືອງວຽງທອງ ແຂວງ ຫົວພັນ ແລະ ເມືອງເຊໂປນ ແຂວງ ສະຫວັນນະເຂດ.
3. ກະກຽມແຜນງົບປະມານ ກິດຈະກຳຮ່ວມມືກັບຫ້ອງການສາທາລະນະສຸກ ແລະ ໂພຊະນາການສຶກສາຮ່ວມກັບຫ້ອງການສາທາເມືອງ ເພື່ອສືບຕສະເໜີຂໍອະນຸມັດຈາກ ທະນາຄານໂລກ.
4. ສ້າງແຜນການຜະລິດເຄື່ອງມື IEC ດ້ານໂພຊະນາການຮ່ວມກັບ ສາທາລະນະສຸກ ແລະ ທີມງານທະນາຄານໂລກ.

### ຈ.3 *ວຽກປັບປຸງຄຸນນະພາບຊີວິດການເປັນຢູ່*

1. ຈັດຝຶກອົບຮົມການຕາຫູກ ແລະ ຍ້ອມສີທຳມະຊາດໃຫ້ແກ່ກຸ່ມຕາຫູກ ບ້ານ ດອນຄູນ ເມືອງ ວຽງທອງ ແຂວງ ຫົວພັນ ( ງົບປະມານໃນການຝຶກອົບຮົມມີແລ້ວ, ມີແຕ່ລໍຖ້າ ອາຈານໄປສອນ)
2. ສັງລວມເກັບກຳຜະລິດຕະພັນຫັດຖະກຳ ບ້ານສາກົກ ແລະ ບ້ານແທ່ນຣິ້ງເພື່ອໄປວາງສະແດງທີ່ເມືອງຊຳເໜືອ ແຂວງ ຫົວພັນ ໃນວັນຫັດຖະກຳແຫ່ງຊາດເດືອນ ພະຈິກ 2013.
3. ຈັດຕັ້ງປະຕິບັດຫ້ອງວາງສະແດງ ແລະ ຫ້ອງຂາຍສິນຄ້າຜະລິດຕະພັນຊາວບ້ານ: ສິ້ນໝີ່, ຜ້າພັນຄໍ, ກະເປົາເງິນ, ຜ້າບ່ຽງ ໃຫ້ແກ່ສະຫະພັນແມ່ຍິງເມືອງ ວຽງທອງ ແຂວງ ຫົວພັນ.

ວັນທີ 19 ພະຈິກ 2013

| ຮັບຮູ້ ແລະ ເຫັນພ້ອມຈາກ<br>ຜູ້ອຳນວຍການບໍລິຫານ ທລຍ | ຢັ້ງຢືນໂດຍຫົວໜ້າພະແນກ<br>ຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
|---|---|---|
| ------------------------ | ----------------------- | -------------------- |
| ບຸນກວ້າງ ສຸວັນນະພັນ | ສີວິໄລ ວໍລະຈັກ | ມະນີວັນ ອິນທະປັນຍາ |

# ເອກະສານຊ້ອນທ້າຍ